ธนาคารกสิกรไทย
开泰银行 KASIKORNBANK

# ແຈ້ງການກ່ຽວກັບນະໂຍບາຍການປົກປ້ອງຂໍ້ມູນສ່ວນບຸກຄົນຂອງ ທະນາຄານກະສິກອນໄທ ຈຳກັດ (ມະຫາຊົນ)

ປັບປຸງ ເດືອນມິຖຸນາ 2023

ທະນາຄານກະສິກອນໄທ ຈຳກັດ (ມະຫາຊົນ) (“**KBank**”) ດຳເນີນທຸລະກິດໂດຍຖືຫຼັກຈາລະຍະທຳ ແລະ ເຄົາລົບຄວາມເປັນສ່ວນຕົວຂອງທ່ານ. KBank ຖືຄວາມສຳຄັນຂອງການປົກປ້ອງ ແລະ ຄວາມປອດໄພຂອງຂໍ້ມູນສ່ວນບຸກຄົນຕະຫຼອດເວລາ ເພື່ອຮັບປະກັນວ່າ: ຂໍ້ມູນສ່ວນບຸກຄົນຂອງທ່ານທີ່ KBank ໄດ້ຮັບ ຈະຖືກນຳໃຊ້ຕາມຈຸດປະສົງ ແລະ ສອດຄ່ອງກັບກົດໝາຍ. KBank ໄດ້ກຳນົດນະໂຍບາຍການປົກປ້ອງຂໍ້ມູນສ່ວນ ບຸກຄົນສະບັບນີ້ (“**ນະໂຍບາຍ**” ສະບັບນີ້) ເພື່ອແຈ້ງໃຫ້ທ່ານ, ໃນຖານະເຈົ້າຂອງຂໍ້ມູນສ່ວນບຸກຄົນ, ຊາບ ກ່ຽວກັບຈຸດປະສົງ ແລະ ລາຍລະອຽດສຳລັບການເກັບກຳຂໍ້ມູນ, ການນຳໃຊ້ ແລະ/ຫຼື ການເປີດເຜີຍຂໍ້ມູນສ່ວນບຸກຄົນ ລວມທັງບັນດາສິດທາງດ້ານກົດໝາຍຂອງທ່ານ.

## 1. ນະໂຍບາຍສະບັບນີ້ມີຜົນໃຊ້ບັງຄັບກັບໃຜ, ແລະ ຊ່ອງທາງການເກັບກຳຂໍ້ມູນສ່ວນບຸກຄົນແມ່ນຫຍັງ?

### 1.1 ນະໂຍບາຍສະບັບນີ້ມີຜົນໃຊ້ບັງຄັບກັບໃຜ?

ນະໂຍບາຍສະບັບນີ້ຈະມີຜົນບັງຄັບໃຊ້ກັບທ່ານ ຖ້າຫາກທ່ານໄດ້ຖືກຈັດເຂົ້າໃນໜຶ່ງ ຫຼື ຫຼາຍປະເພດຂອງບຸກຄົນດັ່ງຕໍ່ໄປນີ້.

| ປະເພດຂອງບຸກຄົນພາຍໃຕ້ນະໂຍບາຍ | ລາຍລະອຽດ ແລະ ຕົວຢ່າງ |
|---|---|
| 1. ລູກຄ້າທີ່ເປັນບຸກຄົນຂອງ KBank ("**ລູກຄ້າທີ່ເປັນບຸກຄົນ**") | ລູກຄ້າທີ່ເປັນບຸກຄົນຂອງ KBank ເຊັ່ນ:<br>– ບຸກຄົນທີ່ກຳລັງໃຊ້ ຫຼື ໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການ<br>– ບຸກຄົນທີ່ຂໍຂໍ້ມູນຂອງຜະລິດຕະພັນ ແລະ/ຫຼື ການບໍລິການ<br>– ບຸກຄົນທີ່ຮັບຮູ້ຂໍ້ມູນຜະລິດຕະພັນ ແລະ/ຫຼື ການບໍລິການ ຜ່ານຊ່ອງທາງຕ່າງໆ<br>– ບຸກຄົນທີ່ KBank ສະເໜີ ຫຼື ເຊີນຊວນ ໃຫ້ນຳໃຊ້ ຫຼື ຍອມຮັບ ຜະລິດຕະພັນ ແລະ/ຫຼື ການບໍລິການ |
| 2. ບຸກຄົນທີ່ກ່ຽວຂ້ອງກັບນິຕິບຸກຄົນ ທີ່ເປັນລູກຄ້າຂອງ KBank ຫຼື ດຳເນີນທຸລະກຳກັບ KBank ("**ບຸກຄະລາກອນຂອງນິຕິບຸກຄົນ**") | ບຸກຄົນທີ່ມີສ່ວນກ່ຽວຂ້ອງກັບນິຕິບຸກຄົນ ທີ່ເປັນລູກຄ້າຂອງ KBank ຫຼື ດຳເນີນທຸລະກຳກັບ KBank ເຊັ່ນ:<br>– ຜູ້ຖືຮຸ້ນ<br>– ຜູ້ອຳນວຍການ<br>– ຜູ້ມີສິດອຳນາດ<br>– ຕົວແທນ ຫຼື ຜູ້ຮ່ວມທຸລະກິດ<br>– ລູກຈ້າງ, ເຈົ້າໜ້າທີ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ |
| 3. ບຸກຄົນທີ່ກ່ຽວຂ້ອງກັບທຸລະກຳຂອງ KBank ຫຼື ລູກຄ້າຂອງ KBank | ບຸກຄົນທີ່ກ່ຽວຂ້ອງກັບທຸລະກຳຂອງ KBank ຫຼື ລູກຄ້າຂອງ KBank ເຊັ່ນ:<br>– ຜູ້ຕິດຕໍ່ປະສານງານ<br>– ລູກຈ້າງ, ພະນັກງານ, ເຈົ້າໜ້າທີ່, ບຸກຄະລາກອນ<br>– ບຸກຄົນໃນຄອບຄົວ, ໝູ່, ເພື່ອນບ້ານ<br>– ບຸກຄົນທີ່ຖືກອ້າງອີງ ຫຼື ແນະນຳໂດຍລູກຄ້າຂອງ KBank<br>– ຜູ້ລົງທຶນ, ຜູ້ຄ້ຳປະກັນ, ຜູ້ຈຳນອງ, ຜູ້ໃຫ້ຫຼັກຊັບຄ້ຳປະກັນ, ເຈົ້າຂອງຜົນປະໂຫຍດສຸດທ້າຍ<br>– ຜູ້ຮ່ວມການຄ້າ ເຊັ່ນ: ຜູ້ສະໜອງ, ຜູ້ສະໜັບສະໜູນ, ຜູ້ຈັດຈຳໜ່າຍ, ຜູ້ຂາຍ, ຜູ້ເຮັດສັນຍາ, ຜູ້ໃຫ້ການບໍລິການ, ຜູ້ຊື້ ເປັນຕົ້ນ<br>– ບຸກຄົນທີ່ຊຳລະເງິນໃຫ້ແກ່ລູກຄ້າຂອງ KBank ຫຼື ຮັບເງິນຈາກລູກຄ້າຂອງ KBank |

| | |
|---|---|
| | - ບຸກຄົນອື່ນໆທີ່ KBank ອາດຈະໄດ້ຮັບຂໍ້ມູນສ່ວນບຸກຄົນຈາກການດຳເນີນທຸລະກຳໂດຍລູກຄ້າ (ເຊັ່ນ: ການປະເມີນມູນຄ່າຊັບສິນ ຫຼື ຂໍ້ກຳນົດຂອງການກູ້ຢືມເງິນ)<br>- ບຸກຄົນທີ່ເຂົ້າເວບໄຊ, ຫຼື ແອັບພິເຄຊັນ (application), ຫຼື ບັນຊີຜູ້ໃຊ້ສື່ສັງຄົມອອນລາຍ (online social media account) ຂອງ KBank ຫຼື ຜູ້ໃຊ້ບໍລິການຢູ່ສາຂາ ຫຼື ສຳນັກງານໃຫຍ່ຂອງ KBank<br>- ຜູ້ຊ່ຽວຊານໃຫ້ຄຳປຶກສາ<br>- ບຸກຄົນອື່ນໆ ທີ່ມີລັກສະນະຄ້າຍຄືບຸກຄົນດັ່ງກ່າວມານີ້ |
| 4. ບຸກຄົນທົ່ວໄປ | ບຸກຄົນທົ່ວໄປ ເຊັ່ນ:<br>- ບຸກຄົນທີ່ KBank ມີສາຍພົວພັນ, ມີການສື່ສານກັນ, ມີການຕິດຕໍ່ພົວພັນກັນໃນຊ່ອງທາງ ອື່ນໆ, ຫຼື ຜູ້ທີ່ສະໜອງຂໍ້ມູນສ່ວນບຸກຄົນໃຫ້ແກ່ KBank, ຫຼື ຜູ້ທີ່ KBank ໄດ້ຮັບຂໍ້ມູນສ່ວນບຸກຄົນ, ບໍ່ວ່າທາງກົງ ຫຼື ທາງອ້ອມ, ບໍ່ວ່າຊ່ອງທາງໃດກໍ່ຕາມ |

### 1.2 ຊ່ອງທາງສຳລັບການເກັບກຳຂໍ້ມູນສ່ວນບຸກຄົນ

KBank ອາດເກັບກຳຂໍ້ມູນສ່ວນບຸກຄົນຂອງທ່ານຜ່ານຊ່ອງທາງ ດັ່ງຕໍ່ໄປນີ້:

(1) ຂໍ້ມູນສ່ວນບຸກຄົນທີ່ທ່ານໄດ້ໃຫ້ແກ່ KBank ໂດຍກົງ ຫຼື ໂດຍຜ່ານ KBank, ຫຼື ທີ່ KBank ມີຢູ່ ຈາກການທີ່ທ່ານໄດ້ນຳໃຊ້ຜະລິດຕະພັນ ແລະ/ ຫຼື ການບໍລິການ, ການຕິດຕໍ່, ການເຂົ້າໄປ, ການຮ່ວມກິດຈະກຳ, ການຄົ້ນຫາຜ່ານທາງຊ່ອງທາງການບໍລິການ ແລະ/ຫຼື ຊ່ອງທາງການຕິດຕໍ່ຂອງ KBank ເຊັ່ນ: ສາຂາ, ສຳນັກງານໃຫຍ່, ເວັບໄຊ, ແອັບພິເຄຊັນ (application), ບັນຊີຜູ້ໃຊ້ສື່ສັງຄົມອອນລາຍ (online social media account) ຂອງ KBank, ອີເມວ, ຕູ້ຝາກ-ຖອນເງິນອັດຕະໂນມັດ (ATM), K-CDM (ຕູ້ຝາກເງິນສົດ) ຫຼື ຕູ້ບໍລິການທາງການເງິນອື່ນໆ, ຕົວແທນຂອງທະນາຄານ, K CHECK ID, ການບໍລິການ cheque direct, ສູນບໍລິການຂໍ້ມູນລູກຄ້າ, ສູນບໍລິການການຄ້າສາກົນ, ໂທລະສັບ, ໂທລະສານ, ໄປສະນີ, ການບໍລິການຂໍ້ຄວາມສັ້ນ (SMS), ແບບສອບຖາມ, ນາມບັດ, ການປະຊຸມ, ການຝຶກອົບຮົມ, ການສຳມະນາ, ກິດຈະກຳ, ການບັນເທີງ, ກິດຈະກຳສົ່ງເສີມການຕະຫຼາດ, ການຕິດຕໍ່ພົວພັນ ຫຼື ຊ່ອງທາງອື່ນໆ.

(2) ຂໍ້ມູນສ່ວນບຸກຄົນທີ່ໄດ້ຮັບ ຫຼື ເຂົ້າເຖິງ ໂດຍ KBank ຈາກແຫຼ່ງຂໍ້ມູນອື່ນ ເຊັ່ນ: ໜ່ວຍງານພາກລັດ, ບໍລິສັດອື່ນໆ ພາຍໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate), ທະນາຄານ ຫຼື ສະຖາບັນການເງິນອື່ນ, ຜູ້ໃຫ້ບໍລິການດ້ານການເງິນ ແລະ ຜູ້ໃຫ້ບໍລິການອື່ນໆຂອງ KBank, ຜູ້ຮ່ວມທຸລະກິດ ແລະ ຜູ້ໃຫ້ບໍລິການຂອງຜູ້ຮ່ວມທຸລະກິດ, ບໍລິສັດທີ່ຮ່ວມອອກຜະລິດຕະພັນ ແລະ/ຫຼື ການບໍລິການກັບ KBank, ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງສປປ ລາວ, ຜູ້ໃຫ້ບໍລິການຂໍ້ມູນຂ່າວສານ, ລູກຄ້າຂອງ KBank, ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຮັດທຸລະກຳກັບ KBank (ເມື່ອທ່ານມີສ່ວນກ່ຽວຂ້ອງກັບບັນດາທຸລະກຳທີ່ກ່າວມາຂ້າງເທິງ), ເຈົ້າໜ້າທີ່ທະບຽນ, ຜູ້ອອກຫຼັກຊັບ, ສື່ສັງຄົມອອນລາຍ (online social media), ຊ່ອງທາງອອນລາຍ (online platform) ຂອງບຸກຄົນທີ່ສາມ, ບຸກຄົນທີ່ມີສິດ ແລະ ອຳນາດຕາມກົດໝາຍ, ບຸກຄົນ ຫຼື ໜ່ວຍງານອື່ນໃດທີ່ KBank ມີສາຍພົວພັນດ້ານກົດໝາຍນຳ ເປັນຕົ້ນ.

## 2. ຂໍ້ມູນສ່ວນບຸກຄົນໃດທີ່ KBank ເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ?

**2.1 ຂໍ້ມູນສ່ວນບຸກຄົນ** ແມ່ນຂໍ້ມູນທີ່ສາມາດລະບຸຕົວຕົນຂອງທ່ານໂດຍກົງ ຫຼື ທາງອ້ອມ ເຊັ່ນ:

**2.1.1** ບຸກຄົນ ໝາຍເຖິງ ລູກຄ້າທີ່ເປັນບຸກຄົນ, ບຸກຄົນທີ່ກ່ຽວຂ້ອງກັບທຸລະກຳຂອງ KBank ຫຼື ລູກຄ້າ KBank ແລະ ບຸກຄົນທົ່ວໄປ.

| ປະເພດຂໍ້ມູນ | ຕົວຢ່າງຂໍ້ມູນທີ່ KBank ເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ |
|---|---|
| ຂໍ້ມູນສ່ວນບຸກຄົນ | - ຄຳນຳໜ້າຊື່, ຊື່ແທ້, ຊື່ກາງ, ນາມສະກຸນ, ນາມແຝງ (alias) (ຖ້າມີ) |

| | |
|---|---|
| | – ເພດ, ວັນເດືອນປີເກີດ, ອາຍຸ<br>– ສະຖານະພາບແຕ່ງງານ, ສະຖານະພາບຄອບຄົວ, ຈຳນວນຄົນໃນຄອບຄົວ ແລະ ລູກ<br>– ຂໍ້ມູນສາຍພົວພັນ (ເຊັ່ນ: ລະຫວ່າງຜູ້ກູ້ຫຼັກ ແລະ ຜູ້ກູ້ຮ່ວມ, ຜູ້ກູ້ຖືບັດຫຼັກ ແລະ ແລະ ບັດເສີມ, ຕົວທ່ານ ແລະ ຜູ້ຮັບຜົນປະໂຫຍດ)<br>– ສັນຊາດ, ປະເທດທີ່ອາໄສຢູ່<br>– ລາຍເຊັນ<br>– ຂໍ້ມູນໃນເອກະສານທີ່ອອກໂດຍໜ່ວຍງານພາກລັດ (ເຊັ່ນ: ສຳເນົາບັດປະຈຳຕົວ, ສຳເນົາ<br>ໜັງສືຜ່ານແດນ, ສຳເນົາວີຊ້າ, ສຳເນົາໃບຢັ້ງຢືນຄົນຕ່າງດ້າວ, ສຳເນົາໃບອະນຸຍາດເຮັດວຽກ, ສຳເນົາໃບທະບຽນວິສາຫະກິດຈາກເຈົ້າໜ້າທີ່ພາກລັດ, ສຳເນົາປື້ມສຳມະໂນຄົວ, ສຳເນົາໃບຢັ້ງຢືນການເກີດ, ສຳເນົາໃບຢັ້ງຢືນການປ່ຽນຊື່, ສຳເນົາໃບຢັ້ງຢືນການແຕ່ງດອງ, ສຳເນົາໃບຢັ້ງຢືນການຢ່າຮ້າງ, ສຳເນົາໃບຢັ້ງຢືນການເສຍຊີວິດ, ສຳເນົາໃບຂັບຂີ່ ຫຼື ເອກະສານທີ່ໃຊ້ຢັ້ງຢືນ ແລະ ຢືນຍັນຕົວຕົນໃນລັກສະນະດຽວກັນ), ຂໍ້ມູນ KYC, ແລະ CDD ເປັນຕົ້ນ. |
| ຂໍ້ມູນຕິດຕໍ່ | – ທີ່ຢູ່ຕາມເອກະສານສຳຄັນ, ທີ່ຢູ່ບ້ານ ແລະ ທີ່ຢູ່ພາຍໃນປະເທດທີ່ທ່ານຖືສັນຊາດ ແລະ ບ່ອນເຮັດວຽກ<br>– ເລກໂທລະສັບ, ເລກໂທລະສັບມືຖື, ໂທລະສານ, ອີເມວ<br>– ຊື່ ຫຼື ຊື່ຜູ້ໃຊ້ ເພື່ອການຕິດຕໍ່ຜ່ານທາງຊ່ອງທາງສື່ສານເອເລັກໂຕນິກ ຫຼື ສື່ສັງຄົມອອນລາຍ (online social media) (ເຊັ່ນ: ຊື່ຜູ້ໃຊ້ LINE (LINE ID))<br>– ຫຼັກຖານ ການພັກອາໄສໃນ ສປປ ລາວ (ສຳລັບຄົນຕ່າງປະເທດ) |
| ຂໍ້ມູນການສຶກສາ ແລະ ການເຮັດວຽກ | – ຂໍ້ມູນຈາກສຳເນົາບັດນັກສຶກສາ, ລະດັບການສຶກສາສູງສຸດ<br>– ອາຊີບ ແລະ ສາຂາອາຊີບ<br>– ຕຳແໜ່ງ, ໄລຍະເວລາການເຮັດວຽກ<br>– ລາຍລະອຽດວຽກ, ປະເພດທຸລະກິດ |
| ຂໍ້ມູນກຳມະສິດ | – ສັດສ່ວນການຖືຮຸ້ນ ແລະ/ຫຼື ຂໍ້ມູນໃນເອກະສານອື່ນ ເພື່ອຢັ້ງຢືນການດຳເນີນທຸລະກິດ (ເຊັ່ນ: ສັນຍາເຊົ່າທາງການຄ້າ) |
| ຂໍ້ມູນການເງິນ ແລະ ທຸລະກຳ | – ເລກບັນຊີເງິນຝາກ, ຈຳນວນເງິນຝາກ, ດອກເບັ້ຍ<br>– ເລກບັດເຄຣດິດ ແລະ ບັດເດບິດ<br>– ຂໍ້ມູນລາຍຮັບ, ແຫຼ່ງທີ່ມາຂອງລາຍຮັບ ແລະ ລາຍຈ່າຍ<br>– ຂໍ້ມູນໃນໃບຢັ້ງຢືນເງິນເດືອນ, ໃບຮັບເງິນເດືອນ/ໂບນັດ ຫຼື ຫຼັກຖານສະແດງລາຍຮັບອື່ນ, ໃບຮັບຮອງລາຍການຝາກຖອນເງິນ (Bank Statement) ຂອງທະນາຄານອື່ນ, ມູນຄ່າຊັບສິນທີ່ຖືກປະເມີນ<br>– ເລກປະຈຳຕົວຜູ້ເສຍອາກອນ ແລະ ຂໍ້ມູນການຊຳລະອາກອນສ່ວນບຸກຄົນ<br>– ຂໍ້ມູນໃນແອັບພິເຄຊັນ(application) ສຳລັບຊ່ອງທາງ, ສິນຄ້າ ແລະ/ຫຼື ການບໍລິການ<br>– ປະເພດບັນຊີ, ໄລຍະເວລາຝາກ, ເງື່ອນໄຂການຊຳລະ, ປະເພດບັດ, ໃບຮັບຮອງລາຍການຝາກຖອນເງິນໃນບັນຊີ (Account Statement)<br>– ຄະແນນ Credit, ວົງເງິນຂອງບັດເຄຣດິດ, ຄະແນນສະສົມ, ການອະນຸມັດວົງເງິນສິນເຊື່ອ, ຂໍ້ມູນການກູ້ຢືມ, ຈຳນວນໜີ້ສິນ, ຂໍ້ມູນຫຼັກຊັບຄ້ຳປະກັນ ແລະ ເອກະສານສະແດງກຳມະສິດຂອງລາຍລະອຽດຫຼັກຊັບຄ້ຳປະກັນ ແລະ ປະຫວັດການຊຳລະ<br>– ຂໍ້ມູນການລົງທຶນ (ເຊັ່ນ: ລາຍລະອຽດການສັ່ງຈອງ ຫຼື ຈອງຫຼັກຊັບ), ລະດັບຄວາມສ່ຽງໃນການລົງທຶນ, ຂໍ້ມູນຕາມແບບພອມປະເມີນຄວາມສ່ຽງ, ຂໍ້ມູນສະຖຽນລະ |

| | |
|---|---|
| | ພາບຂອງລູກຄ້າ, ຂໍ້ມູນການຊື້ຂາຍຫຼັກຊັບ, ມູນຄ່າຂອງຫຼັກຊັບ, ມູນຄ່າການລົງທຶນ, ໄລຍະເວລາການລົງທຶນ)<br>– ປະຫວັດທຸລະກຳ, ລາຍລະອຽດທຸລະກຳ ແລະ ວັດຖຸປະສົງຂອງທຸລະກຳ, ຂໍ້ມູນໃບບິດ ບັນທຶກທຸລະກຳ, ເລກທີອ້າງອີງທຸລະກຳ, ຊ່ອງທາງທຸລະກຳ<br>– ຊື່ຜູ້ໃຊ້ ແລະ ລະຫັດຜ່ານ ສຳລັບແອັບພລິເຄຊັນ (application)<br>– ຂໍ້ມູນການປະກັນໄພ (ເຊັ່ນ: ເອກະສານທີ່ກ່ຽວຂ້ອງກັບຄຳຮ້ອງຂໍເຮັດປະກັນໄພ, ປະເພດປະກັນໄພ, ລາຍລະອຽດຂອງໃບປະກັນໄພ, ວັນເລີ່ມຕົ້ນ ແລະ ສິ້ນສຸດການຄຸ້ມຄອງ, ລາຍລະອຽດຊັບສິນທີ່ເຮັດປະກັນ, ເບ້ຍປະກັນໄພ, ຈຳນວນເງິນປະກັນ ແລະ ລາຍລະອຽດການຮຽກຮ້ອງຈາກປະກັນໄພ)<br>– ຂໍ້ມູນອື່ນໆ ເພື່ອສົ່ງເສີມການນຳໃຊ້ຜະລິດຕະພັນ/ການບໍລິການ (ເຊັ່ນ: ລະຫັດລູກຄ້າ/ລະບົບຂໍ້ມູນລູກຄ້າ (CIS), ຂໍ້ມູນແຊັກ, ຂໍ້ມູນພັນທະບັດ ແລກເງິນ (Bill of Exchange), ວົງເງິນ, ອັດຕາດອກເບ້ຍ, ສະກຸນເງິນທີ່ກ່ຽວຂ້ອງ, ຂໍ້ມູນເພື່ອສະໜັບສະ ໜູນຄຳຮ້ອງຂໍກູ້ຢືມເງິນ, ຂໍ້ມູນການຄ້າ, ຄຳສັ່ງຊື້, ສັນຍາຊື້ ແລະ ຂາຍ ແລະ/ຫຼື ສັນຍາອື່ນໆ, ລາຍລະອຽດການຄ້ຳປະກັນ, ແບບຟອມສຳລັບການແຈ້ງສະຖານະເປັນຄົນອາເມລິກາ ຫຼື ບໍ່ແມ່ນຄົນອາເມລິກາ (FATCA) |
| ຂໍ້ມູນດ້ານເຕັກນິກ, ອຸປະກອນ ຫຼື ເຄື່ອງມື | – ຂໍ້ມູນການນຳໃຊ້ ແອັບພລິເຄຊັນ (application)<br>– ທີ່ຢູ່ IP ຫຼື MAC (IP address ຫຼື MAC address)<br>– ລະຫັດ Cookies (Cookies ID)<br>– Web beacon, Pixel Tag or Software Development Kit (SDK)<br>– ລະຫັດອຸປະກອນ (Device ID)<br>– ລຸ້ນ ແລະ ປະເພດອຸປະກອນ, ເຄືອຂ່າຍ, ຂໍ້ມູນການເຊື່ອມຕໍ່<br>– ຂໍ້ມູນການເຂົ້າເຖິງ, ຂໍ້ມູນການລົງຊື່ໃຊ້ລະບົບຄັ້ງດຽວ (single sign -on (SSO))<br>– ຂໍ້ມູນການໃຊ້ງານຄອມພິວເຕີ (Log)<br>– ຂໍ້ມູນການເຂົ້າສູ່ລະບົບ, ໄລຍະເວລາການເຂົ້າເຖິງ, ການໃຊ້ ແລະ ໄລຍະເວລາການໃຊ້ງານ ແອັບພລິເຄຊັນ(application) ແລະ ເວັບໄຊ, ປະຫວັດການຄົ້ນຫາ, ຂໍ້ມູນການເຂົ້າເວັບ (browsing data)<br>– ຂໍ້ມູນໂຊນເວລາ (timezone) ແລະ ຈຸດພິກັດ (location)<br>– ປະເພດ ແລະ ເວີຊັ້ນຂອງ plug - in browser, ລະບົບປະຕິບັດການ (operating system), ແລະ ຊ່ອງທາງ ລວມເຖິງ ເຕັກໂນໂລຊີອື່ນໃນອຸປະກອນທີ່ທ່ານນຳໃຊ້ ສຳລັບການເຂົ້າເຖິງຊ່ອງທາງ (platform)<br>– ຂໍ້ມູນເຕັກນິກອື່ນ ຈາກການນຳໃຊ້ຊ່ອງທາງ (platform) ແລະ ລະບົບປະຕິບັດການ (operating system) |
| ຂໍ້ມູນອື່ນໆ | – ການບັນທຶກການຕິດຕໍ່ສື່ສານ ຫຼື ໂຕ້ຕອບລະຫວ່າງ ທ່ານ ແລະ KBank, ລາຍລະອຽດການຮ້ອງຮຽນ ແລະ ຄຳເຫັນ, ການຮ້ອງຂໍໃຊ້ສິດ, ຜົນຂອງການສຳຫຼວດ, ການບັນທຶກສຽງ, ຮູບຖ່າຍ, ວິດີໂອ, ບັນທຶກສຽງ, ການບັນທຶກການສື່ສານຜ່ານທາງ log/chat bot, ຮູບຖ່າຍ ຫຼື ວິດີໂອ ຈາກກ້ອງວົງຈອນປິດ (CCTV), ຂໍ້ມູນຄຳສັ່ງສານທີ່ກ່ຽວຂ້ອງກັບທຸລະກຳຂອງລູກຄ້າ KBank ຫຼື ກ່ຽວຂ້ອງກັບການປະຕິບັດຕາມກົດໝາຍຂອງ KBank (ເຊັ່ນ: ຄຳສັ່ງຍຶດຊັບ, ຄຳສັ່ງແຕ່ງຕັ້ງຜູ້ຈັດການຊັບສິນ, ຄຳສັ່ງໃຫ້ເປັນບຸກຄົນຜູ້ເສຍຄວາມສາມາດດ້ານການປະພຶດ ຫຼື ເປັນບຸກຄົນຜູ້ຖືກຈຳກັດຄວາມສາມາດດ້ານການປະພຶດ, ຄຳສັ່ງໃຫ້ຍື່ນຫຼັກຖານເອກະສານ ຫຼື ຫຼັກຖານທາງກາຍະພາບ) ແລະ ຂໍ້ມູນອື່ນທີ່ຄ້າຍຄືຂໍ້ມູນສ່ວນບຸກຄົນ ພາຍໃຕ້ກົດໝາຍ |

| | |
|---|---|
| | ປົກປ້ອງຂໍ້ມູນສ່ວນບຸກຄົນ.<br>– ຂໍ້ມູນການລົງທະບຽນເຂົ້າຮ່ວມກິດຈະກຳຂອງ KBank |

**2.1.2** ບຸກຄະລາກອນຂອງນິຕິບຸກຄົນ ໝາຍເຖິງ ບຸກຄົນທີ່ກ່ຽວຂ້ອງກັບນິຕິບຸກຄົນ ຊຶ່ງແມ່ນລູກຄ້າ ຫຼື ຜູ້ທີ່ເຮັດທຸລະກຳກັບ KBank.

| ປະເພດຂໍ້ມູນ | ຕົວຢ່າງຂໍ້ມູນທີ່ KBank ເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ |
|---|---|
| ຂໍ້ມູນສ່ວນບຸກຄົນ | – ຄຳນຳໜ້າຊື່, ຊື່ແທ້, ຊື່ກາງ, ນາມສະກຸນ, ົນາມແຝງ (alias) (ຖ້າມີ)<br>– ເພດ, ວັນ/ເດືອນ/ປີເກີດ, ອາຍຸ<br>– ສະຖານະພາບແຕ່ງງານ, ລາຍເຊັນ<br>– ຂໍ້ມູນໃນເອກະສານທີ່ອອກໂດຍໜ່ວຍງານພາກລັດ (ເຊັ່ນ: ສຳເນົາບັດປະຈຳຕົວ, ສຳເນົາໜັງສືຜ່ານແດນ, ສຳເນົາວີຊ້າ, ສຳເນົາໃບຢັ້ງຢືນຄົນຕ່າງດ້າວ, ສຳເນົາໃບອະນຸດຍາດເຮັດວຽກ, ສຳເນົາປຶ້ມສຳມະໂນຄົວ ຫຼື ເອກະສານທີ່ສາມາດໃຊ້ຢັ້ງຢືນ ແລະ ຢືນຢັນຕົວຕົນໃນລັກສະນະດຽວກັນ), ຂໍ້ມູນ KYC, CDD ເປັນຕົ້ນ. |
| ຂໍ້ມູນຕິດຕໍ່ | – ທີ່ຢູ່ຕາມເອກະສານສຳຄັນ, ທີ່ຢູ່ບ້ານປັດຈຸບັນ ແລະ ທີ່ຢູ່ພາຍໃນປະເທດທີ່ທ່ານຖືສັນຊາດ ແລະ ບ່ອນເຮັດວຽກ<br>– ເລກໂທລະສັບ, ເລກໂທລະສັບມືຖື, ໂທລະສານ, ອີເມວ |
| ຂໍ້ມູນການເຮັດວຽກ | – ອາຊີບ ແລະ ສາຂາອາຊີບ<br>– ຕຳແໜ່ງ, ໄລຍະເວລາການເຮັດວຽກ<br>– ລາຍລະອຽດວຽກ, ປະເພດທຸລະກິດ |
| ຂໍ້ມູນໃນເອກະສານທີ່ປະກອບໃສ່ທຸລະກຳ | – ໃບຢັ້ງຢືນຂອງບໍລິສັດ (ເຊັ່ນ: ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດລົງທຶນ, ໃບທະບຽນສຳປະທານ, ໃບຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນ, ໃບອະນຸຍາດນຳໃຊ້ກາປະທັບ, ກົດລະບຽບບໍລິສັດ, ໃບອະນຸຍາດດຳເນີນທຸລະກິດ ແລະ ອື່ນໆ)<br>– ລາຍຊື່ຜູ້ຖືຮຸ້ນ<br>– ໃບມອບສິດ |
| ຂໍ້ມູນອື່ນໆ | – ຂໍ້ມູນທີ່ຖືກເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ທີ່ກ່ຽວຂ້ອງກັບສາຍພົວພັນກັບ KBank ເຊັ່ນ: ຂໍ້ມູນທີ່ນິຕິບຸກຄົນໃຫ້ໄວ້ກັບ KBank ໃນສັນຍາ, ລາຍລະອຽດການຮ້ອງຮຽນ ຫຼື ຄຳເຫັນ, ຜົນສຳຫຼວດ, ຂໍ້ມູນການລົງທະບຽນເພື່ອເຂົ້າຮ່ວມກິດຈະກຳຂອງ KBank |

## 2.2 ຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນ

"**ຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນ**" ໝາຍເຖິງ ຂໍ້ມູນສ່ວນບຸກຄົນໃດໜຶ່ງທີ່ກ່ຽວຂ້ອງກັບເຊື້ອຊາດ ຫຼື ຊົນເຜົ່າຕົ້ນກຳເນີດ, ຄວາມຄິດເຫັນທາງດ້ານການເມືອງ, ຄວາມເຊື່ອໃນລັດທິ, ສາດສະໜາ, ຄວາມເຊື່ອກ່ຽວກັບຫຼັກປັດສະຍາ, ພຶດຕິກຳທາງເພດ, ໃນບັນທຶກການແຈ້ງໂທດທາງອາຍາ

, ຂໍ້ມູນສຸຂະພາບ, ການເສຍອົງຄະ, ຂໍ້ມູນກ່ຽວກັບກຳມະບານ (trade union information), ຂໍ້ມູນກ່ຽວກັບພັນທຸກຳ (genetic data), ຂໍ້ມູນຊີວະພາບ (biometric data) ຫຼື ຂໍ້ມູນໃດໜຶ່ງທີ່ຈະສົ່ງຜົນກະທົບຕໍ່ເຈົ້າຂອງຂໍ້ມູນໃນລັກສະນະດຽວກັນ. KBank ບໍ່ມີຄວາມຕັ້ງໃຈທີ່ຈະເກັບກຳຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນຈາກທ່ານ.

ເຖິງຢ່າງໃດກໍຕາມ, ໃນບາງກໍລະນີ KBank ອາດຈະມີຄວາມຈໍາເປັນຕ້ອງເກັບກໍາຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນຈາກທ່ານ ເພື່ອການໃຫ້ບໍລິການ ຫຼື ຜະລິດຕະພັນໃຫ້ແກ່ທ່ານ ເຊັ່ນ: ສາດສະໜາ (ທີ່ລະບຸໃນສໍາເນົາບັດປະຈໍາຕົວ) ຫຼື ເຊື້ອຊາດ (ທີ່ລະບຸໃນສໍາເນົາໜັງສືຜ່ານແດນຂອງບາງປະເທດ), ຂໍ້ມູນຊີວະພາບ (biometric data) (ເຊັ່ນ: ຂໍ້ມູນການຈົດຈໍາໃບໜ້າ, ຂໍ້ມູນການຈົດຈໍາລາຍນິ້ວມື, ຂໍ້ມູນລາຍເຊັນເອເລັກໂຕນິກທີ່ໃຊ້ເຕັກໂນໂລຊີ ຄັດມາຈາກພຶດຕິກໍາສະເພາະຂອງການລົງລາຍເຊັນດັ່ງກ່າວ ເພື່ອການລະບຸຕົວຕົນ ແລະ ການຢັ້ງຢືນຕົວຕົນຂອງບຸກຄົນທີ່ຊຽນລາຍເຊັນດັ່ງກ່າວ), ຂໍ້ມູນບັນທຶກການແຈ້ງໂທດທາງອາຍາ, ຂໍ້ມູນສຸຂະພາບ, ຂໍ້ມູນການເສຍອົງຄະ, ພຶດຕິກໍາທາງເພດ, ແລະ ອື່ນໆ. KBank ຈະເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນ ພາຍໃຕ້ເງື່ອນໄຂວ່າ KBank ໄດ້ຮັບການຍິນຍອມຢ່າງແຈ້ງຊັດຈາກທ່ານ ຫຼື ໄດ້ຮັບອະນຸຍາດຕາມກົດໝາຍ. ການດໍາເນີນການດັ່ງກ່າວຈະດໍາເນີນໄປຕາມແຕ່ລະກໍລະນີ ໃນເວລາທີ່ KBank ຕ້ອງການທີ່ຈະເກັບກໍາຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນຈາກທ່ານ.

(ຍົກເວັ້ນແຕ່ກໍານົດໄວ້ເປັນຢ່າງອື່ນ, ຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນ ທີ່ໄດ້ລະບຸນີ້ຕໍ່ໄປນີ້ຈະເອີ້ນລວມກັນວ່າ: "**ຂໍ້ມູນສ່ວນບຸກຄົນ**".)

### 2.3 ຂໍ້ມູນສ່ວນບຸກຄົນຂອງຜູ້ບໍ່ພົ້ນກະສຽນອາຍຸ, ຜູ້ເສຍຄວາມສາມາດດ້ານການປະພຶດ ຫຼື ຜູ້ຖືກຈໍາກັດຄວາມສາມາດດ້ານການປະພຶດ

KBank ບໍ່ມີຄວາມຕັ້ງໃຈເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນບຸກຄົນຂອງຜູ້ບໍ່ ພົ້ນກະສຽນອາຍຸ, ຜູ້ເສຍຄວາມສາມາດດ້ານການປະພຶດ ຫຼື ຜູ້ຖືກຈໍາກັດຄວາມສາມາດດ້ານການປະພຶດ, ຍົກເວັ້ນແຕ່ KBank ຈະໄດ້ຮັບການຍິນຍອມຈາກຜູ້ປົກຄອງ, ຜູ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງ, ຜູ້ຖືກແຕ່ງຕັ້ງໃຫ້ເປັນຜູ້ຄຸ້ມຄອງ, ຫຼື ເປັນການກະທໍາໃດທີ່ຜູ້ບໍ່ ພົ້ນກະສຽນອາຍຸສາມາດໃຫ້ຄວາມຍິນຍອມໄດ້ດ້ວຍຕົນເອງຕາມກົດໝາຍ (ແລ້ວແຕ່ລະກໍລະນີ) ແລະ/ຫຼື ມີພື້ນຖານຕາມກົດໝາຍຮອງຮັບ. ຖ້າ KBank ພົບວ່າ: ການເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງຜູ້ບໍ່ ພົ້ນກະສຽນອາຍຸ, ຜູ້ເສຍຄວາມສາມາດດ້ານການປະພຶດ ຫຼື ຜູ້ຖືກຈໍາກັດຄວາມສາມາດດ້ານການປະພຶດ ໄດ້ດໍາເນີນໄປໂດຍປາດສະຈາກ (i) ການຍິນຍອມຈາກຜູ້ປົກຄອງ, ຜູ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງ, ຜູ້ຖືກແຕ່ງຕັ້ງໃຫ້ເປັນຜູ້ຄຸ້ມຄອງ ຫຼື ຜູ້ບໍ່ພົ້ນກະສຽນອາຍຸ ໃນກໍລະນີທີ່ຜູ້ບໍ່ພົ້ນກະສຽນອາຍຸສາມາດຍິນຍອມໄດ້ດ້ວຍຕົນເອງຕາມກົດໝາຍ (ແລ້ວແຕ່ລະກໍລະນີ) ແລະ (ii) ພື້ນຖານຕາມກົດໝາຍຮອງຮັບ, KBank ຕ້ອງລຶບ ແລະ ທໍາລາຍຂໍ້ມູນສ່ວນບຸກຄົນດັ່ງກ່າວ.

### 2.4 ຂໍ້ມູນສ່ວນບຸກຄົນຂອງບຸກຄົນທີສາມ

ຖ້າທ່ານໃຫ້ຂໍ້ມູນສ່ວນບຸກຄົນຂອງບຸກຄົນທີສາມ ຜູ້ທີ່ເປັນບຸກຄະລາກອນຂອງນິຕິບຸກຄົນ ແລະ/ຫຼື ຜູ້ທີ່ກ່ຽວຂ້ອງກັບທ່ານ ໃຫ້ແກ່ KBank ເຊັ່ນ: ຜູ້ຖືຮຸ້ນ, ຜູ້ອໍານວຍການ, ຜູ້ມີສິດອໍານາດຕາງໜ້ານິຕິບຸກຄົນ, ສະມາຊິກຄອບຄົວ, ບຸກຄົນອ້າງອີງ, ຜູ້ຮ່ວມການຄ້າ, ຜູ້ຄໍ້າປະກັນ, ຜູ້ຈໍານອງ, ຜູ້ສະໜອງຫຼັກຊັບຄໍ້າປະກັນ, ຜູ້ຮັບຜົນປະໂຫຍດ, ຜູ້ຈັດການຊັບສິນ, ຜູ້ຕິດຕໍ່ໃນກໍລະນີສຸກເສີນ ແລະ/ຫຼື ບຸກຄົນໃດໜຶ່ງ ຕາມເອກະສານທຸລະກໍາຂອງທ່ານ ເປັນຕົ້ນ, ຂໍຄວາມກະລຸນາໃຫ້ທ່ານແຈ້ງໃຫ້ບັນດາບຸກຄົນເຫຼົ່ານັ້ນຊາບເຖິງລາຍລະອຽດພາຍໃຕ້ນະໂຍບາຍສະບັບນີ້ ແລະ ຂໍຄວາມຍິນຍອມຈາກບຸກຄົນເຫຼົ່ານັ້ນ, ຖ້າຈໍາເປັນ, ຫຼື ອີງໃສ່ພື້ນຖານຕາມກົດໝາຍເພື່ອຮອງຮັບການເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນຕົວຂອງບຸກຄົນ ເພື່ອຮັບປະກັນວ່າ: KBank ສາມາດເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນຕົວຂອງບຸກຄົນທີສາມທີ່ກ່າວມານີ້.

## 3. ຈຸດປະສົງໃນການເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານແມ່ນຫຍັງ?

KBank ຈະເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ເທົ່າທີ່ຈໍາເປັນພາຍໃຕ້ຈຸດປະສົງ ທີ່ຖືກຕ້ອງຕາມກົດໝາຍຂອງ KBank ຊຶ່ງລວມເຖິງການເກັບກໍາ, ການນໍາໃຊ້ ແລະ/ຫຼື ການເປີດເຜີຍຂໍ້ມູນສ່ວນບຸກຄົນ ເພື່ອປະຕິບັດຕາມສັນຍາທີ່ທ່ານເປັນຄູ່ສັນຍາ, ເພື່ອປະຕິບັດພັນທະຕາມທີ່ກົດໝາຍກໍານົດ, ເພື່ອຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ, ເພື່ອການດໍາເນີນການໃຫ້ສອດຄ່ອງຕາມການຍິນຍອມຂອງທ່ານ ແລະ/ຫຼື ເພື່ອດໍາເນີນການຕາມພື້ນຖານຕາມກົດໝາຍທີ່ຮອງຮັບການເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນຕົວຂອງບຸກຄົນ. ຈຸດປະສົງຂອງການເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນ ພາຍໃຕ້ນະໂຍບາຍສະບັບນີ້ ມີດັ່ງຕໍ່ໄປນີ້.

ວັດຖຸປະສົງບາງຢ່າງດັ່ງຕໍ່ໄປນີ້ ອາດມີ ຫຼື ບໍ່ມີຜົນບັງຄັບໃຊ້ກັບທ່ານ. ກະລຸນາພິຈາລະນາຈຸດປະສົງຕາມການພົວພັນຄວາມສໍາພັນຂອງທ່ານກັບ KBank ຕາມແຕ່ລະກໍລະນີ.

### 3.1 ຈຸດປະສົງທີ່ຕ້ອງມີການຂໍຄວາມຍິນຍອມ

KBank ຈະເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ອີງຕາມການໃຫ້ຄວາມຍິນຍອມ ເພື່ອຈຸດປະສົງດັ່ງຕໍ່ໄປນີ້.

**3.1.1** ການເກັບກຳ, ການນຳໃຊ້ ແລະ/ຫຼື ການເປີດເຜີຍ ຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນ ໃນກໍລະນີທີ່ KBank ບໍ່ສາມາດອີງໃສ່ພື້ນຖານຕາມກົດໝາຍທີ່ຮອງຮັບການເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນຕົວຂອງບຸກຄົນອື່ນໄດ້, KBank ຕ້ອງຂໍການຍິນຍອມຢ່າງຊັດແຈ້ງຈາກທ່ານ. ຈຸດປະສົງດັ່ງກ່າວຕ້ອງລວມເຖິງ:

(1) ຂໍ້ມູນທາງເລື່ອງສາດສະໜາ ແລະ ເຊື້ອຊາດ (ເຊັ່ນ: ຂໍ້ມູນທີ່ເກັບກຳໄດ້ຈາກສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນຂອງປະເທດໃດໜຶ່ງ ຊຶ່ງ KBank ຕ້ອງນຳໃຊ້ເປັນຫຼັກຖານໃນການລະບຸຕົວຕົນ ແລະ ຢັ້ງຢືນຕົວຕົນເທົ່ານັ້ນ.)

(2) ຂໍ້ມູນທາງຊີວະພາບ (Biometric data) ສຳລັບການລົງລາຍເຊັນ, ການລະບຸຕົວຕົນ ແລະ ການຢັ້ງຢືນຕົວຕົນ, ການບໍລິການຮູ້ຈັກລູກຄ້າທາງເອເລັກໂຕນິກຂອງ KBank ແລະ ເພື່ອການສະໜັບສະໜູນຊ່ວຍເຫຼືອຈາກຜູ້ຮ່ວມທຸລະກິດຂອງ KBank.

(3) ຂໍ້ມູນບັນທຶກສຸຂະພາບ, ຂໍ້ມູນເລື່ອງການເສຍອົງຄະ, ຂໍ້ມູນບັນທຶກການແຈ້ງໂທດທາງອາຍາ ແລະ ພຶດຕິກຳທາງເພດທີ່ KBank ຈະເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ໃນເວລາທີ່ຈຳເປັນ, ເພື່ອການນຳໃຊ້ຜະລິດຕະພັນ ແລະ ການບໍລິການໃດໜຶ່ງຂອງ KBank ເທົ່ານັ້ນ. ບັນທຶກການແຈ້ງໂທດທາງອາຍາ ຈະນຳໃຊ້ສຳລັບການກວດສອບ ແລະ ຍຶດຊັບທີ່ກ່ຽວຂ້ອງ.

**3.1.2** ການວິເຄາະ, ການຄົ້ນຄ້ວາ ແລະ/ຫຼື ການດຳເນີນການດ້ານສະຖິຕິຂໍ້ມູນ ລວມເຖິງ ການດຳເນີນການເພື່ອການພັດທະນາ, ການປັບປຸງຜະລິດຕະພັນ ແລະ/ຫຼື ການບໍລິການຂອງ KBank, ບໍລິສັດອື່ນພາຍໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate), ຜູ້ຮ່ວມທຸລະກິດ ແລະ/ຫຼື ນິຕິບຸກຄົນອື່ນ ທີ່ຕ້ອງໄດ້ຮັບຄວາມຍິນຍອມຈາກທ່ານຕາມກົດໝາຍ.

**3.1.3** ການດຳເນີນການທາງການຕະຫຼາດ, ການຍື່ນຂໍ້ສະເໜີສຳລັບຜະລິດຕະພັນ ແລະ/ຫຼື ບໍລິການ, ສິດທິພິເສດໃນການເຂົ້າຮ່ວມກິດຈະກຳທີ່ KBank ຈັດຂຶ້ນ, ບໍລິສັດອື່ນພາຍໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate), ຜູ້ຮ່ວມທຸລະກິດ ແລະ/ຫຼື ນິຕິບຸກຄົນອື່ນ ລວມເຖິງຂ່າວ, ຄຳແນະທີ່ເປັນປະໂຫຍດ, ການສົ່ງເສີມ ແລະ ການເປີດໂຕກັບລະຍຸດທາງການຕະຫຼາດທີ່ຖືກຄັດເລືອກຢ່າງເໝາະສົມ ທີ່ຕ້ອງຂໍຄວາມຍິນຍອມຈາກທ່ານຕາມກົດໝາຍ.

KBank ອາດຮ້ອງຂໍຄວາມຍິນຍອມຈາກທ່ານໂດຍກົງ ຫຼື ຜ່ານທາງບໍລິສັດອື່ນພາຍໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate), ຜູ້ຮ່ວມທຸລະກິດ ແລະ/ຫຼື ນິຕິບຸກຄົນອື່ນ ຕາມແຕ່ລະກໍລະນີ.

## 3.2 ຈຸດປະສົງທີ່ຕ້ອງມີພື້ນຖານຕາມກົດໝາຍທີ່ຮອງຮັບການເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນຕົວຂອງບຸກຄົນ ນອກຈາກການໃຫ້ຄວາມຍິນຍອມ

KBank ຈະເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ອີງຕາມພື້ນຖານຕາມກົດໝາຍທີ່ຮອງຮັບການເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນຕົວຂອງບຸກຄົນ ເທົ່າທີ່ຈຳເປັນ, ພາຍໃຕ້ຈຸດປະສົງທີ່ຖືກຕ້ອງຕາມກົດໝາຍຂອງ KBank ເຊັ່ນ: ເພື່ອປະຕິບັດຕາມສັນຍາທີ່ທ່ານເປັນຄູ່ສັນຍາ ຫຼື ຕາມທີ່ທ່ານຮ້ອງຂໍ, ເພື່ອປະຕິບັດພັນທະໜ້າທີ່ຕາມທີ່ກົດໝາຍກຳນົດ, ເພື່ອຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ແລະ/ຫຼື ເພື່ອການດຳເນີນການ ພາຍໃຕ້ພື້ນຖານຕາມກົດໝາຍທີ່ຮອງຮັບການເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ຂໍ້ມູນສ່ວນຕົວຂອງບຸກຄົນ ຕາມຈຸດປະສົງດັ່ງນີ້:

**3.2.1 ການດຳເນີນການກ່ອນການເຂົ້າເຮັດສັນຍາກັບ KBank** ເຊັ່ນ: ໃຫ້ຄຳປຶກສາ, ຄຳແນະນຳ ແລະ/ຫຼື ຂໍ້ມູນອື່ນທີ່ກ່ຽວຂ້ອງກັບຜະລິດຕະພັນ ແລະ/ຫຼື ການບໍລິການ, ການວິເຄາະ ແລະ ການປະເມີນຄວາມຕ້ອງການຂອງລູກຄ້າ, ການຢັ້ງຢືນຄຸນສົມບັດ, ການຢັ້ງຢືນສະຖານະຂອງລູກຄ້ານິຕິບຸກຄົນ, ການກວດສອບຄວາມຖືກຕ້ອງຂອງຂໍ້ມູນ ຫຼື ເອກະສານ, ການລະບຸຕົວຕົນ ແລະ ການຢັ້ງຢືນຕົວຕົນ, ລວມເຖິງ ການຮູ້ຈັກລູກຄ້າ (KYC) ແລະ ຂັ້ນຕອນກວດສອບສະຖານະທາງກົດໝາຍຂອງລູກຄ້າ (CDD), ການປະເມີນຊັບສິນ, ການກວດສອບຂໍ້ມູນສິນເຊື່ອ ແລະ/ຫຼື ການຂໍແກ້ໄຂຂໍ້ມູນສິນເຊື່ອ, ການກວດສອບລາຍຊື່ ຈາກ sanction list ຂອງໜ່ວຍງານທີ່ມີສິດອຳນາດ ແລະ/ຫຼື ໜ່ວຍງານພາກລັດ ທີ່ຖືກເປີດເຜີຍທົ່ວໄປຕາມທີ່ກົດໝາຍກຳນົດ, ການກວດສອບການຍຶດຊັບ ຫຼື ລົ້ມລະລາຍ, ການຈຳແນກຄວາມສ່ຽງຂອງລູກຄ້າ ແລະ ການປະກອບຂໍ້ມູນ

ສ່ວນຕົວ/ຂໍ້ມູນສັນຍາເບື້ອງຕົ້ນຂອງລູກຄ້າ ເພື່ອຄວາມສະດວກໃນການສະໝັກໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການຂອງ KBank.

**3.2.2 ການດຳເນີນການໃດໜຶ່ງ ທີ່ກ່ຽວຂ້ອງກັບການພິຈາລະນາຂໍ້ກຳນົດຂອງຜະລິດຕະພັນ ແລະ/ຫຼື ການບໍລິການ** ເຊັ່ນ: ການຕິດຕໍ່ສື່ສານ, ການຮັບ /ສົ່ງເອກະສານ ຫຼື ພັດສະດຸ, ການປະມວນຜົນຄຳຮ້ອງຂໍ ແລະ ການດຳເນີນການ ຕາມຂັ້ນຕອນການອະນຸມັດຄຳຮ້ອງຂໍ (ລວມທັງແຕ່ບໍ່ຈຳກັດສະເພາະແຕ່ ການປະເມີນຊັບສິນຂອງລູກຄ້າ, ການກວດສອບ ແລະ ການປະເມີນລາຄາຊັບສິນ, ການທົບທວນລາຄາຊັບສິນ), ການສ້າງບັດ/ອີງເງິນກູ້, ການເຂົ້າເຮັດສັນຍາ, ຂໍ້ຕົກລົງ ແລະ/ຫຼື ການກະທຳທາງກົດໝາຍອື່ນ, ການລົງທະບຽນເພື່ອນຳໃຊ້ຜະລິດຕະພັນ, ການບໍລິການ ແລະ/ຫຼື ເຂົ້າຮ່ວມກິດຈະກຳຂອງ KBank.

**3.2.3 ການນຳສົ່ງຜະລິດຕະພັນ ແລະ/ຫຼື ການບໍລິການ ພາຍໃຕ້ສັນຍາທີ່ທ່ານເຂົ້າເຮັດກັບ KBank** ເຊັ່ນ:

- ການຮັບເງິນກູ້, ການລົງທຶນ, ການຊື້ປະກັນໄພ, ການຝາກເງິນ, ການຖອນເງິນ, ການໂອນເງິນ, ການແລກປ່ຽນເງິນ
- ການດຳເນີນການໃດໜຶ່ງ ທີ່ກ່ຽວຂ້ອງກັບຂໍ້ກຳນົດຜະລິດຕະພັນ ແລະ/ຫຼື ການບໍລິການ (ເຊັ່ນ: ການເປີດບັນຊີ, ການປ່ຽນແປງຂໍ້ມູນ, ການສ້າງ, ນຳໃຊ້, ແລະ ປ່ຽນແປງວົງເງິນສິນເຊື່ອ ຫຼື ອັບເດດບັນຊີ, ການຈ່າຍເງິນປັນຜົນ ແລະ ດອກເບ້ຍ, ການສົ່ງຄືນເງິນຕົ້ນ, ການຮັບຊຳລະເງິນ, ການດັດແກ້ສັນຍາຝາກເງິນ ແລະ ອັດຕາດອກເບ້ຍທີ່ໄດ້ຕົກລົງກ່ອນໜ້ານີ້, ການລະງັບບັນຊີ, ການລະງັບບັດ, ການກວດສອບຍອດຄົງເຫຼືອໃນບັນຊີ, ການດຳເນີນການລາຍງານທຸລະກຳ, ການດຳເນີນການທີ່ກ່ຽວຂ້ອງກັບສາຍພົວພັນລະຫວ່າງວົງເງິນສິນເຊື່ອ ແລະ ຫຼັກຊັບຄ້ຳປະກັນ, ການດຳເນີນການທີ່ກ່ຽວຂ້ອງກັບຫຼັກຊັບຄ້ຳປະກັນ, ການຊື້ປະກັນໄພຊັບສິນ, ການສະສົມຄະແນນບັດເຄຣດິດ ແລະ ການແລກຄະແນນສະສົມ, ການກະທົບຍອດ (reconciliation), ການປ່ຽນແປງ ຫຼື ເພີ່ມວົງເງິນບັດ, ການກວດສອບຄະແນນສະສົມ, ການເປີດໃຊ້ງານບັດ, ການຈັດກຽມເອກະສານຂໍ້ມູນລູກຄ້າທີ່ໃຊ້ໃນການເຮັດທຸລະກຳຂອງລູກຄ້າ (ເຊັ່ນ: ການຮັບຮອງເອກະສານ))
- ການກວດສອບ, ການຢັ້ງຢືນ ແລະ ການປັບປຸງທຸລະກຳ (ລວມເຖິງທຸລະກຳທີ່ດຳເນີນຜ່ານທາງ K - CDM, ATM, K CHECK ID, ເວັບໄຊ ແລະ/ຫຼື ແອັບພິເຄຊັນ (application) ຂອງ KBank)
- ຂໍ້ກຳນົດຜົນປະໂຫຍດ ແລະ ການດຳເນີນການໃຫ້ສອດຄ່ອງກັບຜົນປະໂຫຍດຂອງລູກຄ້າ
- ການບໍລິຫານຈັດການສາຍພົວພັນກັບລູກຄ້າ, ການດຳເນີນການຫຼັງທຸລະກຳ ການຂາຍ, ການອຳນວຍຄວາມສະດວກໃຫ້ລູກຄ້າ ແລະ/ຫຼື ການຈັດການສິ່ງຂອງສົມມະນາຄຸນໃຫ້ລູກຄ້າ
- ຂໍ້ກຳນົດໃນການໃຫ້ຄຳແນະນຳ ຫຼື ແນວທາງໃນການບໍລິຫານຈັດການຄວາມສ່ຽງ
- ການຈັດການຄຳຮ້ອງຮຽນ, ການແກ້ໄຂບັນຫາ, ການດຳເນີນການຕາມການຮ້ອງຂໍຂອງລູກຄ້າ
- ການຮັບການຊຳລະເງິນ ຫຼື ຊັບສິນໃດໜຶ່ງ
- ການຕິດຕາມການປະຕິບັດຕາມເງື່ອນໄຂໃນການນຳໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການ, ການຍົກເລີກການບໍລິການ

**3.2.4 ການດຳເນີນການດ້ານການຕະຫຼາດທີ່ບໍ່ຕ້ອງຂໍຄວາມຍິນຍອມຂອງທ່ານພາຍໃຕ້ກົດໝາຍ** ເຊັ່ນ:

- ການພິຈາລະນາກຸ່ມລູກຄ້າ ເພື່ອສົ່ງຄຳເຊີນໃຫ້ລູກຄ້າເຂົ້າຮ່ວມກິດຈະກຳ ຫຼື ການສົ່ງເສີມການຂາຍ ຕາມຄວາມເໝາະສົມ
- ການຍື່ນສະເໜີຜະລິດຕະພັນ ແລະ/ຫຼື ການບໍລິການ, ສິດທິພິເສດໃນການເຂົ້າຮ່ວມກິດຈະກຳ, ງານ ຫຼື ການພົບປະຊຸມແຊວທີ່ຈັດໂດຍ KBank, ລວມເຖິງການອຳນວຍຄວາມສະດວກເພື່ອການເຂົ້າຮ່ວມກິດຈະກຳ (ເຊັ່ນ: ການລົງທະບຽນສຳລັບກິດຈະກຳ)
- ການສະເໜີຜະລິດຕະພັນ, ການບໍລິການ ແລະ/ຫຼື ສິດທິພິເສດທີ່ທ່ານຮ້ອງຂໍ ຫຼື ແຈ້ງຜົນປະໂຫຍດຂອງທ່ານ
- ການສະເໜີຜະລິດຕະພັນ ແລະ/ຫຼື ການບໍລິການໃນຮູບແບບດຽວກັນ / ໃກ້ຄຽງກັບຜະລິດຕະພັນ ແລະ/ຫຼື ການບໍລິການຂອງ KBank ຫຼື ບໍລິສັດອື່ນໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate) ທີ່ທ່ານນຳໃຊ້ຢູ່
- ການຕິດຕໍ່ພົວພັນ ໃນກໍລະນີທີ່ທ່ານຍົກເລີກການນຳໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການ ເພື່ອອຳນວຍຄວາມສະດວກໃຫ້ທ່ານ ໃນກໍລະນີທີ່ທ່ານຕ້ອງການກັບຄືນມານຳໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການ ໃນຮູບແບບເກົ່າກັບ KBank, ຫຼື ການສະເໜີຜະລິດຕະພັນ ແລະ/ຫຼື ການບໍລິການອື່ນທີ່ທ່ານອາດສົນໃຈ
- ການຈັດກິດຈະກຳສົ່ງເສີມການຂາຍ (ເຊັ່ນ: ຂໍ້ກຳນົດການໃຫ້ຜົນປະໂຫຍດ ແລະ ຂອງຂວັນ).

**3.2.5 ການວິເຄາະ, ການຄົ້ນຄ້ວາ ແລະ/ຫຼື ການດຳເນີນການດ້ານສະຖິຕິຂໍ້ມູນ ທີ່ບໍ່ຕ້ອງຂໍຄວາມຍິນຍອມຂອງທ່ານພາຍໃຕ້ກົດໝາຍ ເພື່ອການພັດທະນາ, ປັບປຸງຜະລິດຕະພັນ ແລະ/ຫຼື ການບໍລິການ ພາຍໃນ KBank** ເຊັ່ນ:

- ການວິເຄາະ, ການຄົ້ນຄວ້າ, ການຄົ້ນຄວ້າດ້ານການຕະຫຼາດ, ການດໍາເນີນການວິເຄາະຂໍ້ມູນດ້ານສະຖິຕິຂອງຂໍ້ມູນທາງການເງິນຂອງທ່ານ ແລະ/ຫຼື ການເຮັດລາຍງານສໍາລັບການນໍາໃຊ້ພາຍໃນ KBank
- ການວິເຄາະ, ຮູບແບບການດໍາເນີນການ (ເຊັ່ນ: ການໃຫ້ຄະແນນສິນເຊື່ອ)
- ການສຶກສາ, ການວິເຄາະ ແລະ ການຕິດຕາມອັດຕາສ່ວນຄວາມສ່ຽງຂອງສິນເຊື່ອ (credit portfolio)

**3.2.6 ການດໍາເນີນການອື່ນໆຂອງ KBank** ເຊັ່ນ:

- ການບໍລິຫານຈັດການ, ການບໍລິຫານຈັດການຄວາມສ່ຽງ, ການກວດສອບພາຍໃນ KBank
- ການຮັກສາຜົນປະໂຫຍດຕາມກົດໝາຍ
- ການດໍາເນີນການດ້ານຖານຂໍ້ມູນລູກຄ້າ ຫຼື ການບັນທຶກຂໍ້ມູນເຂົ້າໃນລະບົບ ຫຼື ຖານຂໍ້ມູນ
- ການພິຈາລະນາ ແລະ ທົບທວນຄຸນນະພາບສິນເຊື່ອຂອງລູກຄ້າ
- ການແຈ້ງການຊໍາລະໜີ້ ຫຼື ຕໍ່ອາຍຸຜະລິດຕະພັນ ແລະ/ຫຼື ການບໍລິການ
- ການເກັບໜີ້
- ການສໍາຫຼວດຄວາມພໍໃຈ ແລະ ການປະເມີນພາຍຫຼັງການນໍາໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການ
- ການດໍາເນີນຄະດີ ຫຼື ຂະບວນການທາງກົດໝາຍອື່ນໆ
- ການເຂົ້າຮ່ວມ, ການປະສານງານ ແລະ/ຫຼື ການມອບໝາຍວຽກງານໃຫ້ຄົນອື່ນເຮັດແທນຕົນ ຫຼື ຮ່ວມກັບ KBank (ເຊັ່ນ: ເພື່ອການອອກແບບຜະລິດຕະພັນ ຫຼື ການບໍລິການ, ການອອກແບບປະສົບການການບໍລິການລູກຄ້າ, ການອອກແບບຂັ້ນຕອນ ຫຼື ການສະໜັບສະໜູນການນໍາສົ່ງຜະລິດຕະພັນ ແລະ/ຫຼື ການບໍລິການ)
- ການມອບສິດອໍານາດ ແລະ/ຫຼື ໜ້າທີ່, ການບໍລິຫານຈັດການການດໍາເນີນງານຂອງ KBank ແລະ ບໍລິສັດອື່ນໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate)
- ການນໍາໃຊ້ກ້ອງວົງຈອນປິດ (CCTV), ການຄວບຄຸມການເຂົ້າ/ອອກ ທີ່ດິນ ແລະ ສິ່ງປຸກສ້າງຂອງ KBank
- ການບໍລິຫານຈັດການຄໍາຮ້ອງຮຽນ ຫຼື ການບໍລິຫານຈັດການເຫດການທີ່ຜິດກົດໝາຍ ຫຼື ເຫດການທີ່ໜ້າສົງໄສ (ເຊັ່ນ: ການສໍ້ໂກງ, ການຟອກເງິນ, ການກໍ່ການຮ້າຍ ແລະ ການແຜ່ກະຈາຍອາວຸດທີ່ມີການທໍາລາຍລ້າງສູງ, ອາດຊະຍາກໍາ, ການລະເມີດຊັບສິນທາງປັນຍາ ລວມເຖິງ ການບໍລິຫານຈັດການການວາງແຜນ, ການກວດກາ, ການເຝົ້າລະວັງ, ການເກັບກໍາຫຼັກຖານ, ການລາຍງານ ແລະ/ຫຼື ການກວດຈັບ)
- ການປ້ອງກັນ ແລະ ການປະເມີນຄວາມສ່ຽງຂອງລະບົບສະຖາບັນການເງິນ, ຊຶ່ງອາດເກີດຂຶ້ນຈາກການໃຫ້ການສະໜັບສະໜູນທາງການເງິນ
- ການສ້າງຖານຂໍ້ມູນຄວາມສ່ຽງດ້ານທຸລະກິດຕໍ່ KBank
- ການດໍາເນີນການດ້ານໄອທີ, ການບໍລິຫານຈັດການ ແລະ ປ້ອງກັນລະບົບການສື່ສານ, ການຕອບສະໜອງ ແລະ ການຫຼຸດຜ່ອນຄວາມສ່ຽງດ້ານໄອທີ ແລະ ອາດຊະຍາກໍາທາງຄອມພິວເຕີ (cyber threats)

**3.2.7 ການປະຕິບັດຕາມຄໍາສັ່ງຂອງໜ່ວຍງານທີ່ມີສິດອໍານາດ ແລະ/ຫຼື ການປະຕິບັດຕາມກົດໝາຍ** ເຊັ່ນ:

- ການປະຕິບັດຕາມຄໍາສັ່ງສານ, ໜ່ວຍງານພາກລັດ, ໜ່ວຍງານທີ່ຄຸ້ມຄອງທະນາຄານ, ເຈົ້າໜ້າທີ່ທີ່ມີສິດອໍານາດ ພາຍໃຕ້ກົດໝາຍທີ່ກ່ຽວຂ້ອງທີ່ KBank ຕ້ອງປະຕິບັດຕາມ, ບໍ່ວ່າໃນ ສປປ ລາວ ຫຼື ປະເທດອື່ນ, ລວມເຖິງລະບຽບການ ແລະ ກົດລະບຽບທີ່ອອກພາຍໃຕ້ບັນດາກົດໝາຍເຫຼົ່ານີ້, ທີ່ມີຜົນບັງຄັບໃຊ້ໃນປັດຈຸບັນ, ທີ່ຈະຖືກປັບປຸງ ຫຼື ມີຜົນບັງຄັບໃຊ້ໃນອະນາຄົດ.

**3.2.8 ການປ້ອງກັນ ຫຼື ລະງັບຄວາມເປັນອັນຕະລາຍຕໍ່ຊີວິດ, ຮ່າງກາຍ ຫຼື ສຸຂະພາບຂອງບຸກຄົນ**

**3.2.9 ການເຮັດເອກະສານທາງປະຫວັດສາດ ຫຼື ບົດບັນທຶກຈົດໝາຍເຫດ ສໍາລັບຜົນປະໂຫຍດສາທາລະນະ ຫຼື ກ່ຽວຂ້ອງກັບການສຶກສາ, ການຄົ້ນຄວ້າ ຫຼື ສະຖິຕິ**

**3.2.10 ການດໍາເນີນການດ້ານຜົນປະໂຫຍດສາທາລະນະຂອງ KBank ຫຼື ການປະຕິບັດໜ້າທີ່ ໂດຍໃຊ້ສິດອໍານາດຂອງໜ່ວຍງານພາກລັດທີ່ໄດ້ມອບໃຫ້ KBank**

ຖ້າວ່າ KBank ຈໍາເປັນຕ້ອງເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ເພື່ອການລິງນາມ ຫຼື ການປະຕິບັດໃຫ້ສອດຄ່ອງກັບສັນຍາທີ່ທ່ານເຂົ້າເຮັດກັບ KBank ແລະ/ຫຼື ເພື່ອການປະຕິບັດໜ້າທີ່ຂອງ KBank ພາຍໃຕ້ກົດໝາຍ ແລະ ຕາມການ

ຮ້ອງຂໍວ່າ ທ່ານຈະບໍ່ສະໜອງຂໍ້ມູນສ່ວນບຸກຄົນທີ່ຈໍາເປັນໃຫ້ KBank ຫຼື ທ່ານເລືອກທີ່ຈະລຶບບັນຊີຜູ້ໃຊ້ຂອງທ່ານຈາກແອັບພລິເຄຊັນ (application) ຂອງ KBank, KBank ອາດຈະບໍ່ສາມາດອະນຸມັດ ຫຼື ນໍາສົ່ງ/ສະໜອງ ຜະລິດຕະພັນ ແລະ/ຫຼື ການບໍລິການ, ບໍ່ວ່າບາງສ່ວນ ຫຼື ທັງໝົດ, ໃຫ້ກັບທ່ານ ແລະ ອາດສົ່ງຜົນກະທົບຕໍ່ການປະຕິບັດໜ້າທີ່ຂອງ KBank ພາຍໃຕ້ກົດໝາຍ ຫຼື ສາຍພົວພັນຂອງທ່ານກັບ KBank.

## 4. ຂໍ້ມູນສ່ວນບຸກຄົນຂອງທ່ານຈະຖືກເປີດເຜີຍໃຫ້ໃຜຮັບຮູ້ແດ່?

ພາຍໃຕ້ການຍິນຍອມຂອງທ່ານ ຫຼື ເງື່ອນໄຂທີ່ກົດໝາຍອະນຸຍາດ, KBank ອາດຈະເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່ບຸກຄົນທີສາມ. ບຸກຄົນ ຫຼື ໜ່ວຍງານທີ່ໄດ້ຮັບຂໍ້ມູນສ່ວນບຸກຄົນດັ່ງກ່າວຈະເກັບກໍາ, ນໍາໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ພາຍໃນຂອບເຂດທີ່ທ່ານໃຫ້ການຍິນຍອມເທົ່ານັ້ນ, ຫຼື ພາຍໃຕ້ຂອບເຂດໃນນະໂຍບາຍສະບັບນີ້. ໃນບາງກໍລະນີ, ທ່ານອາດຢູ່ພາຍໃຕ້ນະໂຍບາຍປົກປ້ອງຂໍ້ມູນສ່ວນບຸກຄົນຂອງຜູ້ຮັບຂໍ້ມູນສ່ວນບຸກຄົນຂອງທ່ານ. ຜູ້ຮັບຂໍ້ມູນສ່ວນບຸກຄົນຂອງທ່ານອາດຢູ່ໃນ ສປປ ລາວ ຫຼື ປະເທດອື່ນ.

KBank ອາດເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່ບຸກຄົນ ຫຼື ໜ່ວຍງານ ອີງຕາມສາຍພົວພັນ ແລະ ທຸລະກໍາຂອງທ່ານດັ່ງນີ້:

| ປະເພດຂໍ້ມູນສ່ວນບຸກຄົນ | ລາຍລະອຽດ |
|---|---|
| **ບໍລິສັດອື່ນໃນກຸ່ມທຸລະກິດການເງິນຂອງ KBank** (KBank Financial Conglomerate) | KBank ອາດເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ບໍລິສັດອື່ນໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate) ຕາມຈຸດປະສົງທີ່ໄດ້ກໍານົດໄວ້ ຫຼື ອີງຕາມການຍິນຍອມຂອງທ່ານພາຍໃຕ້ນະໂຍບາຍສະບັບນີ້. ບໍລິສັດອື່ນໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate) ສາມາດອີງຕາມການຍິນຍອມທີ່ KBank ໄດ້ຮັບ. |
| **ຜູ້ໃຫ້ບໍລິການແກ່ KBank** | KBank ອາດນໍາໃຊ້ບໍລິສັດອື່ນ, ຜູ້ຮ່ວມການຄ້າ, ຕົວແທນຂອງ KBank, ຜູ້ເຮັດສັນຍາຕໍ່ ຫຼື ຜູ້ໃຫ້ບໍລິການພາຍນອກ ເພື່ອດໍາເນີນທຸລະກິດຕາງໜ້າໃຫ້ KBank ຫຼື ເພື່ອສະໜັບສະໜູນເງື່ອນໄຂຜະລິດຕະພັນ ແລະ/ຫຼື ການບໍລິການຂອງ KBank ໃຫ້ແກ່ທ່ານ. ສະນັ້ນ, KBank ອາດເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ກັບຜູ້ໃຫ້ບໍລິການຂອງ KBank, ລວມທັງແຕ່ບໍ່ຈໍາກັດເຖິງ:<br>- ຕົວແທນຂອງທະນາຄານ<br>- ຜູ້ໃຫ້ບໍລິການດ້ານລະບົບໂຄງສ້າງພື້ນຖານດິຈິຕອນ ແລະ ຜູ້ໃຫ້ບໍລິການລະບົບຖານຂໍ້ມູນເພື່ອແລກປ່ຽນຂໍ້ມູນລະຫວ່າງສະຖາບັນການເງິນ<br>- ຜູ້ໃຫ້ບໍລິການດ້ານການປະເມີນມູນຄ່າຊັບສິນ<br>- ຜູ້ດໍາເນີນກິດຈະການດ້ານໂທລະຄົມ<br>- ຜູ້ໃຫ້ບໍລິການດ້ານໄອທີ, ດ້ານການສະໜັບສະໜູນເຕັກໂນໂລຊີ ແລະ ດ້ານຄວາມປອດໄພ<br>- ຜູ້ໃຫ້ບໍລິການດ້ານຄຣາວຄອມພິວເຕີ (Cloud computing)<br>- ຜູ້ໃຫ້ບໍລິການດ້ານການຕະຫຼາດ<br>- ຜູ້ໃຫ້ບໍລິການດ້ານການຈັດເກັບເອກະສານ<br>- ຜູ້ໃຫ້ບໍລິການດ້ານສື່ສັງຄົມອອນລາຍ (Online social media)<br>- ຜູ້ໃຫ້ບໍລິການດ້ານຊ່ອງທາງການຊໍາລະ<br>- ຜູ້ໃຫ້ບໍລິການດ້ານການຈັດເກັບໜີ້<br>- ໂຮງພິມ ຫຼື ຜູ້ໃຫ້ບໍລິການດ້ານການພິມ<br>- ຜູ້ຜະລິດບັດ<br>- ຜູ້ໃຫ້ບໍລິການດ້ານການນໍາສົ່ງເອກະສານ ແລະ ພັດສະດຸ<br>- ຜູ້ໃຫ້ບໍລິການດ້ານການໃຫ້ຄວາມຊ່ວຍເຫຼືອ |
| **ຜູ້ຮ່ວມທຸລະກິດຂອງ KBank** | KBank ອາດເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່<br>- ຜູ້ຮ່ວມທຸລະກິດຂອງ KBank ລວມເຖິງຜູ້ທີ່ຮ່ວມກັນສະໜອງຜະລິດຕະພັນ ແລະ/ຫຼື ການບໍລິການ (ເຊັ່ນ: ບໍລິສັດປະກັນທົ່ວໄປ ຫຼື ບໍລິສັດປະກັນຊີວິດ) |

| | |
|---|---|
| | – ຜູ້ຮ່ວມທຸລະກິດສໍາລັບການສະສົມຄະແນນ ຫຼື tokenization<br>– ຜູ້ຮ່ວມທຸລະກິດທີ່ສ້າງຜະລິດຕະພັນຮ່ວມກັນ<br>– ທະນາຄານ ຫຼື ສະຖາບັນການເງິນອື່ນ (ເຊັ່ນ: ທະນາຄານຕົວແທນທີ່ຢູ່ຕ່າງປະເທດ)<br>– ຜູ້ຮ່ວມທຸລະກິດທີ່ເປັນບໍລິສັດ fintech<br>– ຜູ້ຮັບປະກັນຮ່ວມ<br><br>ໃນກໍລະນີທີ່ຂໍ້ມູນສ່ວນບຸກຄົນຂອງທ່ານຖືກເປີດເຜີຍໃຫ້ແກ່ຜູ້ຮ່ວມທຸລະກິດ ເພື່ອຈຸດປະສົງທາງດ້ານການຕະຫຼາດຂອງຂອງຜູ້ຮ່ວມທຸລະກິດ ເຊັ່ນ: ສໍາລັບການສົ່ງເສີມການຂາຍ, ການພົວພັນສາທາລະນະ ຫຼື ການສະເໜີ ຜະລິດຕະພັນ ແລະ/ຫຼື ການບໍລິການ ໂດຍຜູ້ຮ່ວມທຸລະກິດໃຫ້ແກ່ທ່ານ, KBank ຈະແຈ້ງຊື່ຂອງຜູ້ຮ່ວມທຸລະກິດໃຫ້ທ່ານຊາບ ເພື່ອສະໜັບສະໜູນການຕັດສິນໃຈຂອງທ່ານໃນການໃຫ້ຄວາມຍິນຍອມ. ຜູ້ຮ່ວມທຸລະກິດສາມາດອີງຕາມການຍິນຍອມທີ່ KBank ໄດ້ຮັບ. |
| **ບຸກຄົນທີ່ກົດໝາຍກໍານົດ** | ໃນບາງກໍລະນີ, KBank ອາດຈະຖືກບັງຄັບໃຫ້ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ອີງຕາມຄໍາສັ່ງຂອງຜູ້ທີ່ມີສິດອໍານາດທາງກົດໝາຍ ຫຼື ສິດຕາມກົດໝາຍ ແລະ/ຫຼື ເພື່ອປະຕິບັດຕາມກົດໝາຍ. ຜູ້ຮັບຂໍ້ມູນສ່ວນບຸກຄົນຂອງທ່ານ ປະກອບມີ:<br><br>– ໜ່ວຍງານບັງຄັບປະຕິບັດກົດໝາຍ<br>– ທະນາຄານ ແຫ່ງ ສປປ ລາວ, ໜ່ວຍງານຄຸ້ມຄອງທະນາຄານ ແລະ ໜ່ວຍງານທີ່ມີສິດອໍານາດ<br>– ໜ່ວຍງານຂອງພາກລັດ<br>– ສະມາຄົມ, ໜ່ວຍງານ ຫຼື ບຸກຄົນອື່ນ ທີ່ຈໍາເປັນຕ້ອງປະຕິບັດໜ້າທີ່ພາຍໃຕ້ກົດໝາຍ ຫຼື ລະບຽບການ ຫຼື ເພື່ອປົກປ້ອງສິດຂອງ KBank, ສິດຂອງບຸກຄົນທີສາມ ຊຶ່ງລວມເຖິງ ຂະບວນການທາງກົດໝາຍທີ່ກ່ຽວຂ້ອງ |
| **ທີ່ປຶກສາ/ຜູ້ຊ່ຽວຊານ** | ເພື່ອຜົນປະໂຫຍດໃນການດໍາເນີນທຸລະກິດຂອງ KBank, KBank ອາດຈະເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່:<br><br>– ຜູ້ກວດສອບບັນຊີ<br>– ຜູ້ກວດສອບບັນຊີພາຍນອກ<br>– ທີ່ປຶກສາດ້ານກົດໝາຍ<br>– ທີ່ປຶກສາດ້ານອາກອນ<br>– ບໍລິສັດຈັດອັນດັບຄວາມນ່າເຊື່ອຖື (credit rating)<br>– ທີ່ປຶກສາ ຫຼື ຜູ້ຊ່ຽວຊານອື່ນ, ແລ້ວແຕ່ກໍລະນີ |
| **ຜູ້ຈະໄດ້ຮັບໂອນ ແລະ/ຫຼື ຜູ້ຮັບໂອນໃນທຸລະກໍາໃດໜຶ່ງ ຫຼື ການຄວບກິດຈະການຂອງ KBank** | ໃນກໍລະນີທີ່ KBank ດໍາເນີນການປັບໂຄງສ້າງອົງກອນ, ປັບໂຄງສ້າງໜີ້, ຄວບກິດຈະການ, ເຂົ້າຊື້ກິດຈະການ, ໂອນສິດ, ຍຸບເລີກກິດຈະການ ຫຼື ເຫດການອື່ນໃດທີ່ມີລັກສະນະດຽວກັນ, KBank ອາດຈະຕ້ອງເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່:<br><br>– ຜູ້ຮ່ວມການຄ້າ, ຜູ້ທີ່ສົນໃຈ<br>– ບໍລິສັດບໍລິຫານຈັດການຊັບສິນ ແລະ/ຫຼື ຜູ້ຮັບສິດເຫຼົ່ານັ້ນ |
| **ບຸກຄົນທີ່ສາມໃດໜຶ່ງ** | KBank ອາດເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່ບຸກຄົນທີສາມ ຕາມຈຸດປະສົງທີ່ລະບຸໃນນະໂຍບາຍສະບັບນີ້. ບຸກຄົນທີສາມໃດໜຶ່ງທີ່ໄດ້ຮັບຂໍ້ມູນສ່ວນບຸກຄົນຂອງທ່ານ ລວມທັງແຕ່ບໍ່ຈໍາກັດເຖິງ:<br><br>– ບຸກຄົນໃດທີ່ທ່ານເຂົ້າເຮັດສັນຍານໍາ ຫຼື ມີສາຍພົວພັນກ່ຽວຂ້ອງກັບທຸລະກໍາ (ເຊັ່ນ: ບຸກຄົນອ້າງອີງ, ຜູ້ຄໍ້າປະກັນ, ຜູ້ຈໍານອງ, ຜູ້ສະໜອງຫຼັກຊັບຄໍ້າປະກັນ ແລະ ຜູ້ຮັບ |

| | |
|---|---|
| | ຜົນປະໂຫຍດ ຫຼື ສະຖານທູດທີ່ຮັບຮອງເອກະສານ)<br>– ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງສປປ ລາວຜູ້ພັດທະນາດ້ານໂຄງສ້າງພື້ນຖານເຕັກໂນໂລຊີ ແລະ/ຫຼື ລະບົບວຽກງານຂອງ KBank<br>– ທະນາຄານ ຫຼື ສະຖາບັນການເງິນອື່ນ ທີ່ທ່ານໄດ້ຮ່ວມແບ່ງປັນທຸລະກຳ<br>– ຜູ້ອອກຫຼັກຊັບ, ນາຍທະບຽນຫຼັກຊັບ, ຜູ້ຈັດການກອງທຶນ, ຜູ້ຮັບຝາກຊັບສິນ, ຫຼື ບໍລິສັດບໍລິຫານຈັດການຊັບສິນໃດໜຶ່ງ ທີ່ກ່ຽວຂ້ອງກັບທຸລະກຳຂອງທ່ານ.<br>– ສະມະຄົມເພື່ອການເງິນລະຫວ່າງທະນາຄານສາກົນ (SWIFT) ສະມາຊິກຂອງບໍລິສັດ ID ດິຈິຕອນແຫ່ງຊາດ (National Digital ID Company Limited)<br>– ຜູ້ອອກບັດ (ເຊັ່ນ: ບັດວີຊ້າ (VISA), ບັດມັດເຕີ (Mastercard), JCB, UPI)<br>– ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາ<br>– ຜູ້ໃຊ້ບໍລິການ e - KYC ຂອງ KBank<br>– ຜູ້ໃຫ້ບໍລິການສື່ສັງຄົມອອນລາຍ (online social media)<br>– ບຸກຄົນສາທາລະນະ ຫຼື ບຸກຄົນທຳມະດາ |

## 5. KBank ຈະສົ່ງ ຫຼື ຖ່າຍໂອນຂໍ້ມູນສ່ວນບຸກຄົນຂອງທ່ານໄປປະເທດອື່ນ ຫຼື ບໍ່?

- KBank ອາດຈຳເປັນຕ້ອງສົ່ງ ຫຼື ຖ່າຍໂອນຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່ບໍລິສັດອື່ນໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate) ທີ່ຕັ້ງຢູ່ໃນປະເທດອື່ນ, ຫຼື ຜູ້ຮັບຂໍ້ມູນຜູ້ອື່ນ, ທີ່ເປັນສ່ວນໜຶ່ງຂອງການດຳເນີນທຸລະກິດຕາມປົກກະຕິທົ່ວໄປຂອງ KBank. ຕົວຢ່າງ: ການສົ່ງ ຫຼື ຖ່າຍໂອນຂໍ້ມູນສ່ວນບຸກຄົນ ເພື່ອຈັດເກັບຂໍ້ມູນໃນຊ່ອງທາງຄຣາວ (cloud platforms) ຫຼື ເຊີເວີ (servers) ທີ່ຢູ່ໃນປະເທດອື່ນ, ການສົ່ງ ຫຼື ຖ່າຍໂອນຂໍ້ມູນຂອງທຸລະກຳການໂອນເງິນຂ້າມແດນໄປຫາສະຖາບັນການເງິນທີ່ຢູ່ໃນປະເທດອື່ນ ໂດຍຜ່ານຕົວກາງການຈັດການການໂອນເງິນລະຫວ່າງປະເທດ, ຜູ້ຮ່ວມການຄ້າທີ່ເປັນນາຍທະນາຄານເອກະຊົນໃນປະເທດອື່ນ, ທະນາຄານ ຫຼື ສະຖາບັນການເງິນອື່ນ ຊຶ່ງເປັນທະນາຄານຕົວແທນ ຫຼື ທະນາຄານ nostro (nostro banks) ໃນປະເທດອື່ນ, ຜູ້ຮ່ວມທຸລະກິດລວມເຖິງ ຜູ້ທີ່ຮ່ວມສະໜອງຜະລິດຕະພັນ ແລະ/ຫຼື ການບໍລິການ ແລະ ຜູ້ຮ່ວມທຸລະກິດທີ່ສ້າງຜະລິດຕະພັນຮ່ວມກັນ, ຜູ້ໃຫ້ບໍລິການສື່ສັງຄົມອອນລາຍ (online social media), ເຈົ້າໜ້າທີ່ພາກລັດໃນປະເທດອື່ນ ແລະ/ຫຼື ບຸກຄົນທີ່ມີການພົວພັນກັບທຸລະກຳຂອງທ່ານໃນປະເທດອື່ນ ເປັນຕົ້ນ.

ຖ້າວ່າ, ມາດຕະຖານການປົກປ້ອງຂໍ້ມູນສ່ວນບຸກຄົນຂອງປະເທດປາຍທາງມີບໍ່ພຽງພໍ, KBank ຕ້ອງຮັບປະກັນວ່າຂໍ້ມູນສ່ວນບຸກຄົນຈະຖືກສົ່ງ ແລະ ຖ່າຍໂອນ ໂດຍສອດຄ່ອງກັບກົດໝາຍ ແລະ ຈະຕ້ອງວາງມາດຕະຖານການປົກປ້ອງຂໍ້ມູນສ່ວນບຸກຄົນຕາມທີ່ຈຳເປັນ ແລະ ເໝາະສົມ ເພື່ອ ແລະ ໃຫ້ສອດຄ່ອງກັບມາດຕະຖານການຮັກສາຄວາມລັບ. ຕົວຢ່າງ: ຕ້ອງໄດ້ເຮັດຂໍ້ຕົກລົງກັບຜູ້ຮັບຂໍ້ມູນໃນປະເທດນັ້ນໆ ເພື່ອຮັບປະກັນວ່າຂໍ້ມູນສ່ວນບຸກຄົນຂອງທ່ານຈະຖືກປົກປ້ອງພາຍໃຕ້ມາດຕະຖານການປົກປ້ອງຂໍ້ມູນສ່ວນບຸກຄົນທີ່ທຽບເທົ່າກັບ ມາດຕະຖານຂອງ ສປປ ລາວ. ຖ້າຜູ້ຮັບຂໍ້ມູນເປັນບໍລິສັດອື່ນພາຍໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate), KBank ອາດຕັດສິນໃຈບັງຄັບໃຊ້ກົດລະບຽບການຄຸ້ມຄອງຂໍ້ມູນສ່ວນບຸກຄົນພາຍໃນອົງກອນ (binding corporate rules) ທີ່ໄດ້ຮັບການ ຢັ້ງຢືນ ແລະ ຮັບຮອງ ໂດຍໜ່ວຍງານທີ່ມີສິດອຳນາດ ແລະ ຈະສົ່ງ ແລະ ຖ່າຍໂອນຂໍ້ມູນສ່ວນບຸກຄົນໄປໃຫ້ບໍລິສັດອື່ນໃນກຸ່ມທຸລະກິດການເງິນຂອງ KBank (KBank Financial Conglomerate) ທີ່ຕັ້ງຢູ່ໃນປະເທດອື່ນ ໂດຍສອດຄ່ອງກັບກົດລະບຽບການຄຸ້ມຄອງຂໍ້ມູນສ່ວນບຸກຄົນພາຍໃນອົງກອນ (binding corporate rules) ທີ່ກ່າວມາ.

## 6. ການນຳໃຊ້ cookies ແລະ / ຫຼື ເຕັກໂນໂລຊີທີ່ຄ້າຍຄືກັນ

KBank ອາດເກັບກຳ ແລະ ນຳໃຊ້ cookies ແລະ/ຫຼື ເຕັກໂນໂລຊີອື່ນທີ່ຄ້າຍຄືກັນ ໃນເວລາທີ່ທ່ານນຳໃຊ້ເວັບໄຊຂອງ KBank ແລະ/ຫຼື ແອັບພິເຄຊັນ (application) ລວມເຖິງ ການເຮັດທຸລະກຳ, ການນຳໃຊ້ຜະລິດຕະພັນ ແລະ/ຫຼື ການນບໍລິການຂອງ KBank ຜ່ານຊ່ອງທາງດິຈິຕອນ ແລະ ເຄືອຂ່າຍອິນເຕີເນັດ. ການເກັບກຳ cookies ແລະ/ຫຼື ການນຳໃຊ້ເຕັກໂນໂລຊີອື່ນທີ່ຄ້າຍຄືກັນ ຈະຊ່ວຍໃຫ້ KBank ເກັບກຳ ການນຳໃຊ້ ແລະ ຄວາມພຶງພໍໃຈ ຂອງທ່ານ, ລວມເຖິງ ການວິເຄາະຄວາມສົນໃຈຂອງທ່ານເພື່ອປັບປຸງ ແລະ ພັດທະນາປະສິດທິພາບຂອງເວັບໄຊ ແລະ ແອັບພິເຄຊັນ (application) ຂອງ KBank ເພື່ອຕອບສະໜອງຄວາມຕ້ອງການແລະການນຳໃຊ້ຂອງ

ທ່ານ ເພື່ອໃຫ້ທ່ານມີປະສົບການທີ່ດີໃນການນໍາໃຊ້ເວັບໄຊ ແລະ ແອັບພິເຄຊັນ(application) ຂອງ KBank. ທ່ານສາມາດສຶກສາລາຍລະອຽດເພີ່ມເຕີມຈາກ "ນະໂຍບາຍ Cookies" ຂອງ KBank ໄດ້ທີ່ www.kasikornbank.com/en/privacy-policy/Pages/CookiesPolicy.aspx

ນອກຈາກນັ້ນ, KBank ອາດເປີດເຜີຍຂໍ້ມູນທີ່ບໍ່ສາມາດລະບຸຕົວຕົນຂອງທ່ານ ໃຫ້ແກ່ຜູ້ໃຫ້ບໍລິການວິເຄາະຂໍ້ມູນ ເຊັ່ນ: Google, ທັງໃນ ສປປ ລາວ ແລະ ປະເທດອື່ນ. Google ຈະນໍາໃຊ້ເຕັກໂນໂລຊີ ແລະ ເຄື່ອງມື ເພື່ອວິເຄາະຂໍ້ມູນ ເຊັ່ນ: cookies ແລະ/ຫຼື ຊຸດພັດທະນາຊອບແວ (SDK) ເພື່ອຕິດຕາມ ແລະ ເຮັດລາຍງານການວິເຄາະຂໍ້ມູນທີ່ກ່ຽວຂ້ອງກັບການນໍາໃຊ້ເວັບໄຊ ແລະ/ຫຼື ແອັບພິເຄຊັນ (application) KBank ຂອງທ່ານ. ທ່ານສາມາດສຶກສາລາຍລະອຽດການວິເຄາະຂໍ້ມູນຂອງ Google ພາຍໃຕ້ຫົວຂໍ້ "ວິທີທີ່ Google ນໍາໃຊ້ຂໍ້ມູນເມື່ອທ່ານເຂົ້າໃຊ້ເວັບໄຊ ຫຼື ແອັບ (apps) ຂອງຜູ້ຮ່ວມທຸລະກິດ (How Google uses data when you use your partner's sites or apps)" ໄດ້ທີ່ www.google.com/policies/privacy/partners ຫຼື ເວັບໄຊອື່ນໆທີ່ Google ກໍານົດ.

## 7. KBank ຈະເກັບຮັກສາຂໍ້ມູນສ່ວນບຸກຄົນຂອງທ່ານໄວ້ດົນປານໃດ?

KBank ຈະເກັບຮັກສາຂໍ້ມູນສ່ວນບຸກຄົນຂອງທ່ານໃນໄລຍະທີ່ທ່ານເປັນລູກຄ້າຂອງ KBank ຫຼື ມີສາຍພົວພັນກັບ KBank, ຫຼື ພາຍໃນໄລຍະເວລາທີ່ກໍານົດເພື່ອເຮັດຕາມຈຸດປະສົງທີ່ກ່ຽວຂ້ອງກັບນະໂຍບາຍສະບັບນີ້ໃຫ້ສໍາເລັດ. ໃນເວລາທີ່ສາຍພົວພັນຂອງທ່ານກັບ KBank ສິ້ນສຸດລົງ, KBank ຈະເກັບຮັກສາຂໍ້ມູນສ່ວນບຸກຄົນຂອງທ່ານຕໍ່ໄປເປັນໄລຍະເວລາເທົ່າທີ່ຈໍາເປັນ ອີງຕາມອາຍຸຄວາມ ຫຼື ໄລຍະເວລາທີ່ກົດໝາຍກໍານົດ ຫຼື ອະນຸຍາດ, ຕົວຢ່າງ:

- ຂໍ້ມູນສ່ວນບຸກຄົນຈະຖືກເກັບຮັກສາໂດຍສອດຄ່ອງກັບກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນໄລຍະເວລາ 5 - 10 ປີ ຫຼັງຈາກສາຍພົວພັນສິ້ນສຸດ, ຕາມແຕ່ກໍລະນີ.
- ຂໍ້ມູນສ່ວນບຸກຄົນຈະຖືກເກັບຮັກສາໂດຍສອດຄ່ອງກັບກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍວ່າດ້ວຍຫຼັກຊັບ, ກົດໝາຍວ່າດ້ວຍການບັນຊີ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເປັນໄລຍະເວລາ 10 ປີ ຫຼັງຈາກສາຍພົວພັນສິ້ນສຸດ.

KBank ຈະດໍາເນີນການຕາມຂັ້ນຕອນທີ່ເໝາະສົມ ເພື່ອລຶບ ຫຼື ທໍາລາຍ ຂໍ້ມູນສ່ວນບຸກຄົນຂອງທ່ານ ຫຼື ເຮັດໃຫ້ຂໍ້ມູນບໍ່ສາມາດລະບຸຕົວຕົນໄດ້ ເມື່ອ ບໍ່ມີຄວາມຈໍາເປັນອີກຕໍ່ໄປ ຫຼື ສິ້ນສຸດໄລຍະເວລາດັ່ງກ່າວ.

## 8. KBank ຈະປົກປ້ອງຂໍ້ມູນສ່ວນບຸກຄົນຂອງທ່ານໄດ້ແນວໃດ?

Kbank ຈະນໍາໃຊ້ມາດຕະການປ້ອງກັນທາງດ້ານເຕັກນິກ, ດ້ານບໍລິຫານຈັດການ ແລະ ມາດຕະການປົກປ້ອງໃນທາງກາຍຍະພາບ ເພື່ອເກັບກໍາຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ປອດໄພ, ເພື່ອສືບຕໍ່ການຮັກສາຄວາມລັບ, ຄວາມຖືກຕ້ອງ, ຄວາມສົມບູນ ແລະ ຄວາມພ້ອມຂອງຂໍ້ມູນສ່ວນບຸກຄົນຂອງທ່ານ, ເພື່ອປ້ອງການການເຂົ້າເຖິງ, ການເກັບກໍາ, ການດັດແກ້, ການແກ້ໄຂ, ການນໍາໃຊ້ ຫຼື ການເປີດເຜີຍຂໍ້ມູນສ່ວນບຸກຄົນໂດຍບໍ່ມີສິດອໍານາດ ຫຼື ບໍ່ຖືກຕ້ອງຕາມກົດໝາຍ ໂດຍສອດຄ່ອງກັບຂໍ້ກໍານົດຕາມກົດໝາຍ.

KBank ໄດ້ວາງມາດຕະການທີ່ເໝາະສົມ ເພື່ອປ້ອງກັນການລະເມີດຂໍ້ມູນສ່ວນບຸກຄົນ. KBank ຈຶ່ງໄດ້ກໍານົດນະໂຍບາຍ, ຂັ້ນຕອນ ແລະ ເງື່ອນໄຂ ໃນການປົກປ້ອງຂໍ້ມູນສ່ວນບຸກຄົນ ເຊັ່ນ: ມາດຕະການປ້ອງກັນການເຂົ້າເຖິງຂໍ້ມູນສ່ວນບຸກຄົນ ແລະ ການນໍາໃຊ້ອຸປະກອນທີ່ປອດໄພ ແລະ ເໝາະສົມໃນການຈັດເກັບ ແລະ ປະມວນຜົນຂໍ້ມູນສ່ວນບຸກຄົນ, ຂໍ້ຈໍາກັດຂອງການເຂົ້າເຖິງຂໍ້ມູນສ່ວນບຸກຄົນ, ການລະບຸສິດຂອງຜູ້ໃຊ້ໃນການເຂົ້າເຖິງຂໍ້ມູນສ່ວນບຸກຄົນ, ສິດໃນການອະນຸຍາດໃຫ້ພະນັກງານທີ່ຖືກມອບໝາຍໃຫ້ເຂົ້າເຖິງຂໍ້ມູນສ່ວນບຸກຄົນ ແລະ ຄວາມຮັບຜິດຊອບຂອງຜູ້ໃຊ້ ເພື່ອປ້ອງກັນການເຂົ້າເຖິງຂໍ້ມູນສ່ວນບຸກຄົນ, ການເປີດເຜີຍຂໍ້ມູນ, ການຮັບຮູ້ຂໍ້ມູນ ຫຼື ການເຮັດສໍາເນົາຂໍ້ມູນສ່ວນບຸກຄົນ ໂດຍບໍ່ມີສິດອໍານາດ, ຫຼື ການລັກເຄື່ອງມືທີ່ໃຊ້ສໍາລັບການຈັດເກັບ ຫຼື ປະມວນຜົນຂໍ້ມູນສ່ວນບຸກຄົນ. ສະນັ້ນ, ຈຶ່ງມີການກໍານົດມາດຕະການ ເພື່ອຕິດຕາມການເຂົ້າເຖິງ, ການປ່ຽນແປງ, ການລຶບ ຫຼື ການຖ່າຍໂອນຂໍ້ມູນສ່ວນບຸກຄົນ ທີ່ສອດຄ່ອງ ແລະ ເໝາະສົມສໍາລັບວິທີການ ແລະ ເຄື່ອງມືໃນການເກັບເກັບກໍາ, ນໍາໃຊ້ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນ, ລວມເຖິງການກວດສອບເພື່ອປະເມີນປະສິດທິຜົນຂອງການປະຕິບັດຕາມນະໂຍບາຍ, ຂັ້ນຕອນ ແລະ ເງື່ອນໄຂຂອງການປົກປ້ອງຂໍ້ມູນສ່ວນບຸກຄົນ.

ຜູ້ບໍລິຫານລະດັບສູງ, ພະນັກງານ, ບຸກຄະລາກອນ, ຄູ່ສັນຍາ, ຕົວແທນ, ທີ່ປຶກສາຂອງ KBank ແລະ ຜູ້ຮັບຂໍ້ມູນຈາກ KBank ຕ້ອງຮັກສາສືບຕໍ່ການເກັບຮັກສາຂໍ້ມູນສ່ວນບຸກຄົນເປັນຄວາມລັບ ໃຫ້ສອດຄ່ອງກັບມາດຕະການຮັກສາຄວາມລັບທີ່ KBank ກໍານົດ.

## 9. ສິດຂອງທ່ານກ່ຽວກັບຂໍ້ມູນສ່ວນບຸກຄົນຂອງທ່ານມີຫຍັງແດ່?

ສິດຂອງທ່ານພາຍໃຕ້ຂໍ້ກຳນົດນີ້ເປັນສິດຕາມກົດໝາຍທີ່ທ່ານຄວນຊາບ. ທ່ານສາມາດໃຊ້ສິດຕາມທີ່ກົດໝາຍກຳນົດ ແລະ ທີ່ມີຢູ່ໃນນະໂຍບາຍສະບັບນີ້ ຫຼື ທີ່ຈະຖືກປັບປຸງໃນອະນາຄົດ, ລວມເຖິງເງື່ອນໄຂທີ່ KBank ກຳນົດ. ຖ້າທ່ານອາຍຸຕ່ຳກວ່າ 20 ປີ ຫຼື ມີຂໍ້ຈຳກັດໃນດ້ານຄວາມສາມາດທາງການປະພຶດໃນການເຮັດນິຕິກຳຕາມກົດໝາຍ, ທ່ານສາມາດຮ້ອງຂໍ ພໍ່ ແລະ/ຫຼື ແມ່ ຂອງທ່ານ, ຜູ້ປົກຄອງທີ່ຖືກແຕ່ງຕັ້ງ ຫຼື ຜູ້ມີສິດອຳນາດ ເພື່ອສະແດງຄວາມຕັ້ງໃຈໃນການໃຊ້ສິດເຫຼົ່ານີ້ແທນທ່ານໄດ້.

**9.1 ສິດໃນການເພີກຖອນການຍິນຍອມ (ຍົກເລີກ) :** ທ່ານມີສິດເພີກຖອນຄວາມຍິນຍອມທີ່ທ່ານໃຫ້ໄວ້ແກ່ KBank ກ່ອນໜ້ານີ້ເພື່ອເກັບກຳ, ນຳໃຊ້ ແລະ ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ (ບໍ່ວ່າຄວາມຍິນຍອມດັ່ງກ່າວຈະໃຫ້ກ່ອນ ຫຼື ຫຼັງການບັງຄັບໃຊ້ກົດໝາຍປົກປ້ອງຂໍ້ມູນສ່ວນບຸກຄົນ), ເວລາໃດກໍ່ໄດ້ໃນລະຫວ່າງທີ່ KBank ຖືຂໍ້ມູນສ່ວນບຸກຄົນຂອງທ່ານ, ຍົກເວັ້ນແຕ່ຈະມີຂໍ້ຫ້າມຕາມກົດໝາຍ ຫຼື ມີສັນຍາທີ່ເປັນປະໂຫຍດຕໍ່ທ່ານທີ່ຍັງມີຜົນບັງຄັບໃຊ້ຢູ່. ການເກັບກຳ, ການນຳໃຊ້ ແລະ/ຫຼື ການເປີດເຜີຍຂໍ້ມູນສ່ວນບຸກຄົນທີ່ໄດ້ດຳເນີນການກ່ອນໜ້າການເພີກຖອນການຍິນຍອມຂອງທ່ານຈະບໍ່ມີຜົນກະທົບ.

ເຖິງຢ່າງໃດກໍ່ຕາມ, ການເພີກຖອນການຍິນຍອມຂອງທ່ານທີ່ກ່ຽວຂ້ອງ ແລະ ຈຳເປັນສຳລັບການຂໍໃຊ້ບໍລິການ ອາດເຮັດໃຫ້ KBank ບໍ່ສາມາດປະຕິບັດຕາມສັນຍາ ຫຼື ສະໜອງການບໍລິການໃຫ້ແກ່ທ່ານ, ຫຼື ອາດເຮັດໃຫ້ທຸລະກຳ ຫຼື ກິດຈະກຳອື່ນໆທີ່ກ່ຽວຂ້ອງຖືກລະງັບ ຫຼື ຢຸດຊົ່ວຄາວ ຫຼື ອາດສົ່ງຜົນກະທົບຕໍ່ການຮັບຮູ້ຜະລິດຕະພັນ ແລະ/ຫຼື ການບໍລິການຂອງທ່ານ, ເຊັ່ນວ່າ: ທ່ານອາດຈະບໍ່ໄດ້ຮັບການສະເໜີຜະລິດຕະພັນ ແລະ/ຫຼື ການບໍລິການ, ຜົນປະໂຫຍດ, ການສົ່ງເສີມ ຫຼື ຂໍ້ສະເໜີໃໝ່ໆ, ຫຼື ອາດບໍ່ໄດ້ຮັບຂໍ້ມູນຜະລິດຕະພັນ ຫຼື ການບໍລິການທາງເລືອກອື່ນທີ່ກົງກັບຄວາມຕ້ອງການຂອງທ່ານຫຼາຍກວ່າ, ຫຼື ອາດບໍ່ໄດ້ຮັບຂ່າວສານ ແລະ ຂໍ້ສະເໜີແນະທີ່ເປັນປະໂຫຍກຕໍ່ທ່ານ ເປັນຕົ້ນ. ເພື່ອຜົນປະໂຫຍດຕໍ່ທ່ານເອງ, ທ່ານຄວນກຳນົດ ແລະ ສອບຖາມກ່ຽວກັບຜົນກະທົບທີ່ອາດເກີດຂຶ້ນກ່ອນທີ່ທ່ານຈະຕັດສິນໃຈເພີກຖອນການຍິນຍອມຂອງທ່ານ.

**9.2 ສິດໃນການເຂົ້າເຖິງ**: ທ່ານມີສິດເຂົ້າເຖິງຂໍ້ມູນສ່ວນບຸກຄົນຂອງທ່ານ ພາຍໃຕ້ຄວາມຮັບຜິດຊອບຂອງ KBank ແລະ ມີສິດຮ້ອງຂໍໃຫ້ KBank ໃຫ້ສຳເນົາຂໍ້ມູນສ່ວນບຸກຄົນຂອງທ່ານ ແລະ ແຈ້ງໃຫ້ທ່ານຮັບຊາບເຖິງວິທີການໄດ້ມາຂອງຂໍ້ມູນສ່ວນບຸກຄົນຂອງທ່ານ.

**9.3 ສິດໃນການໄດ້ຮັບແລະໂອນຖ່າຍຂໍ້ມູນ**: ທ່ານມີສິດຮ້ອງຂໍຂໍ້ມູນສ່ວນບຸກຄົນຂອງທ່ານ ທີ່ KBank ໄດ້ດຳເນີນການໃຫ້ຢູ່ໃນຮູບແບບທີ່ສາມາດອ່ານ ແລະ ນຳໃຊ້ໄດ້ທົ່ວໄປດ້ວຍເຄື່ອງມື ຫຼື ອຸປະກອນອັດຕະໂນມັດ, ແລະ ສາມາດນຳໃຊ້ ຫຼື ເປີດເຜີຍຜ່ານວິທີການອັດຕະໂນມັດ. ທ່ານຍັງມີສິດຮ້ອງຂໍໃຫ້ KBank ສົ່ງ ຫຼື ຖ່າຍໂອນຂໍ້ມູນສ່ວນບຸກຄົນຂອງທ່ານໃນຮູບແບບດັ່ງກ່າວໄປເຖິງຜູ້ຄວບຄຸມຂໍ້ມູນອື່ນໆ ຖ້າສາມາດດຳເນີນການຜ່ານວິທີການອັດຕະໂນມັດ, ແລະ ຂໍຂໍ້ມູນສ່ວນບຸກຄົນໃນຮູບແບບດັ່ງກ່າວ ທີ່ KBank ສົ່ງ ຫຼື ຖ່າຍໂອນໂດຍກົງໄປເຖິງຜູ້ຄວບຄຸມຂໍ້ມູນອື່ນໆ, ເວັ້ນແຕ່ຈະບໍ່ສາມາດດຳເນີນການໄດ້ເນື່ອງຈາກບັນຫາທາງເຕັກນິກ.

ຂໍ້ມູນສ່ວນບຸກຄົນດັ່ງກ່າວຂອງທ່ານ ຕ້ອງເປັນຂໍ້ມູນສ່ວນບຸກຄົນທີ່ທ່ານຍິນຍອມໃຫ້ KBank ເພື່ອເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ຫຼື ຕ້ອງເປັນຂໍ້ມູນສ່ວນບຸກຄົນທີ່ KBank ຈຳເປັນຕ້ອງເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍ ເພື່ອໃຫ້ທ່ານນຳໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການຂອງ KBank ອີງຕາມຄວາມຕັ້ງໃຈຂອງທ່ານໃນການເປັນຄູ່ສັນຍາກັບ KBank ຫຼື ເພື່ອດຳເນີນຕາມຄຳຮ້ອງຂໍຂອງທ່ານກ່ອນການນຳໃຊ້ຜະລິດຕະພັນ ແລະ/ຫຼື ການບໍລິການຂອງ KBank ຫຼື ອາດເປັນຂໍ້ມູນສ່ວນບຸກຄົນອື່ນໆຕາມທີ່ໜ່ວຍງານທີ່ມີສິດອຳນາດກຳນົດ.

**9.4 ສິດໃນການຄັດຄ້ານ**: ທ່ານມີສິດຍື່ນຄັດຄ້ານການເກັບກຳ, ການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃນເວລາໃດກໍ່ໄດ້. ຖ້າວ່າການເກັບກຳ, ການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ, ທີ່ທ່ານຍື່ນຄັດຄ້ານນັ້ນ, ໄດ້ເຮັດໄປໂດຍທີ່ມີຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງ KBank ຫຼື ບຸກຄົນອື່ນໃດ ຫຼື ນິຕິບຸກຄົນອື່ນໃດ, ຫຼື ເພື່ອຜົນປະໂຫຍດສາທາລະນະ, KBank ຈະດຳເນີນການເກັບກຳ, ນຳໃຊ້ ແລະ ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານຕໍ່ໄປ ເມື່ອ KBank ສາມາດໃຫ້ເຫດຜົນທາງກົດໝາຍວ່າ: ການເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານນັ້ນ ມີຄວາມສຳຄັນຢ່າງພຽງພໍ ຫຼື ດຳເນີນການເພື່ອການສ້າງຕັ້ງ, ການປ້ອງກັນ, ການນຳໃຊ້ ຫຼື ການປະຕິບັດຕາມ, ສິດໃນການຮຽກຮ້ອງຕາມກົດໝາຍທີ່ບັງຄັບໃຊ້, ແລ້ວແຕ່ກໍລະນີ.

ນອກຈາກນັ້ນ, ທ່ານມີສິດຍື່ນຄັດຄ້ານຕໍ່ການເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນ ຊຶ່ງໄດ້ດຳເນີນເພື່ອຈຸດປະສົງທີ່ກ່ຽວຂ້ອງກັບການຕະຫຼາດໂດຍກົງ ຫຼື ເພື່ອຈຸດປະສົງທາງວິທະຍາສາດ, ປະຫວັດສາດ ຫຼື ການສຶກສາ ແລະ ການຄົ້ນຄວ້າທາງດ້ານສະຖິຕິ.

**9.5 ສິດໃນການລຶບ ຫຼື ທຳລາຍ** : ທ່ານມີສິດຮ້ອງຂໍໃຫ້ KBank ລຶບ ຫຼື ທຳລາຍຂໍ້ມູນສ່ວນບຸກຄົນຂອງທ່ານ ຫຼື ເຮັດໃຫ້ຂໍ້ມູນບໍ່ສາມາດລະບຸຕົວຕົນໄດ້ ຖ້າທ່ານເຊື່ອວ່າ: ຂໍ້ມູນສ່ວນບຸກຄົນຂອງທ່ານໄດ້ຖືກເກັບກຳ, ນຳໃຊ້ ແລະ/ຫຼື ເປີດເຜີຍຢ່າງບໍ່ຖືກຕ້ອງຕາມກົດໝາຍ, ຊຶ່ງບໍ່ສອດຄ່ອງກັບກົດໝາຍ ຫຼື ຖ້າທ່ານເຫັນວ່າບໍ່ມີຄວາມຈຳເປັນອີກຕໍ່ໄປທີ່ KBank ຈະເກັບຮັກສາຂໍ້ມູນສ່ວນບຸກຄົນຂອງທ່ານ

ພາຍໃຕ້ຈຸດປະສົງຂອງນະໂຍບາຍສະບັບນີ້ ຫຼື ໃນເວລາທີ່ທ່ານໃຊ້ສິດເພື່ອເພີກຖອນຄວາມຍິນຍອມ ຫຼື ສິດໃນການຄັດຄ້ານຕາມທີ່ລະບຸໄວ້ຂ້າງຕົ້ນ.

**9.6 ສິດໃນລະງັບ** : ທ່ານມີສິດຮ້ອງຂໍໃຫ້ KBank ລະງັບການນຳໃຊ້ຂໍ້ມູນສ່ວນບຸກຄົນຂອງທ່ານ ເມື່ອ (1) ໃນລະຫວ່າງທີ່ KBank ດຳເນີນການສອບສວນຕາມຄຳຮ້ອງຂໍໃຊ້ສິດຂອງທ່ານໃນການແກ້ໄຂ ຫຼື ການຄັດຄ້ານ ຫຼື ກໍລະນີອື່ນໃດ, ຫຼື (2) ໃນກໍລະນີທີ່ KBank ບໍ່ມີຄວາມຈຳເປັນທີ່ຈະເກັບຂໍ້ມູນສ່ວນບຸກຄົນຂອງທ່ານອີກຕໍ່ໄປ ແລະ KBank ຕ້ອງລຶບ ຫຼື ທຳລາຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ຖືກຕ້ອງຕາມກົດໝາຍທີ່ບັງຄັບໃຊ້, ແຕ່ທ່ານຮ້ອງຂໍໃຫ້ KBank ລະງັບການໃຊ້ຂໍ້ມູນຂອງທ່ານແທນການລຶບ ຫຼື ທຳລາຍຂໍ້ມູນ.

**9.7 ສິດໃນການແກ້ໄຂ** : ທ່ານມີສິດຮ້ອງຂໍໃຫ້ແກ້ໄຂຂໍ້ມູນສ່ວນບຸກຄົນຂອງທ່ານ ເພື່ອໃຫ້ຖືກຕ້ອງ, ລ່າສຸດ (up to date), ສົມບູນ ແລະ ບໍ່ເຮັດໃຫ້ເກີດການເຂົ້າໃຈຜິດ.

**9.8 ສິດໃນການຍື່ນຄຳຮ້ອງ**: ທ່ານມີສິດຍື່ນຄຳຮ້ອງຮຽນຫາໜ່ວຍງານທີ່ມີສິດອຳນາດ ຖ້າທ່ານເຊື່ອວ່າ: ການເກັບກຳ, ການນຳໃຊ້ ແລະ ການເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານຖືກລະເມີດ ຫຼື ບໍ່ຖືກຕ້ອງຕາມກົດໝາຍ.

ການໃຊ້ສິດຂ້າງເທິງດັ່ງກ່າວ ອາດຖືກຈຳກັດໂດຍກົດໝາຍທີ່ບັງຄັບໃຊ້ ແລະ ບາງກໍລະນີ, ອາດມີສາເຫດທີ່ມີຜົນບັງຄັບໃຊ້ທີ່ເຮັດໃຫ້ KBank ສາມາດປະຕິເສດຄຳຮ້ອງຂໍຂອງທ່ານ ທີ່ອາດເຮັດໃຫ້ KBank ປະຕິເສດຄຳຂໍຂອງທ່ານ ຫຼື ອາດເຮັດໃຫ້ KBank ບໍ່ສາມາດດຳເນີນການຕາມຄຳຮ້ອງຂໍຂອງທ່ານໄດ້ ເຊັ່ນ: ການປະຕິບັດຕາມກົດໝາຍ ຫຼື ຄຳສັ່ງສານ, ເພື່ອສາທາລະນະປະໂຫຍດ, ການໃຊ້ສິດຂ້າງເທິງດັ່ງກ່າວອາດເປັນການລະເມີດສິດ ຫຼື ເສລີພາບຂອງບຸກຄົນອື່ນ ເປັນຕົ້ນ. ຖ້າ KBank ປະຕິເສດຄຳຮ້ອງຂໍດັ່ງກ່າວ, KBank ຈະແຈ້ງເຫດຜົນໃນການປະຕິເສດດັ່ງກ່າວແກ່ທ່ານ.

ທ່ານສາມາດຍື່ນຄຳຮ້ອງຂໍເພື່ອໃຊ້ສິດຜ່ານຊ່ອງທາງດັ່ງຕໍ່ໄປນີ້:

| ສິດ | ຊ່ອງທາງການນຳໃຊ້ສິດ | | | ໄລຍະເວລາດຳເນີນການ (ເລີ່ມແຕ່ມື້ທີ່ທ່ານຍື່ນຄຳຮ້ອງຂໍ ແລະ ເອກະສານປະກອບສຳເລັດ) |
|---|---|---|---|---|
| | K PLUS | ສູນບໍລິການ K - Contact Center | ສາຂາ | |
| ສິດໃນການເພີກຖອນ (ຍົກເລີກ) | ✓ | ✓ | - | 7 ວັນລັດຖະການ |
| ສິດໃນການເຂົ້າເຖິງ | - | - | ✓ | |
| ສິດໃນການໄດ້ຮັບແລະໂອນຖ່າຍຂໍ້ມູນ | - | - | ✓ | |
| ສິດໃນການຄັດຄ້ານ | - | ✓ | - | 30 ວັນ |
| ສິດໃນການລຶບ ຫຼື ທຳລາຍ | - | ✓ | - | |
| ສິດໃນການລະງັບ | - | ✓ | - | |
| ສິດໃນການແກ້ໄຂ | - | - | ✓ | ໂດຍທັນທີ |

## 10. KBank ຈະແກ້ໄຂ ຫຼື ດັດແກ້ນະໂຍບາຍນີ້ບໍ່?

KBank ອາດພິຈາລະນາແກ້ໄຂ, ດັດແກ້ ຫຼື ປ່ຽນແປງນະໂຍບາຍນີ້ເປັນແຕ່ລະໄລຍະ ຕາມທີ່ເຫັນສົມຄວນ ແລະ ຕາມທີ່ກົດໝາຍອະນຸຍາດ. ໃນກໍລະນີທີ່ມີການແກ້ໄຂ ຫຼື ການດັດແກ້ ຫຼື ການປ່ຽນແປງນະໂຍບາຍນີ້, KBank ຈະປະກາດນະໂຍບາຍປັດຈຸບັນໃນເວັບໄຊຂອງ KBank ທີ່ www.kasikornbank.com/en/privacy-policy.

## 11. ຈະຕິດຕໍ່ KBank ແລະ ເຈົ້າໜ້າທີ່ຜູ້ປົກປ້ອງຂໍ້ມູນໄດ້ແນວໃດ?

ຖ້າທ່ານມີຄໍາແນະນໍາໃດໜຶ່ງ ຫຼື ຕ້ອງການສອບຖາມກ່ຽວກັບຂໍ້ມູນທີ່ກ່ຽວຂ້ອງກັບລາຍລະອຽດການເກັບກໍາ, ການນໍາໃຊ້ ແລະ/ຫຼື ການເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ລວມເຖິງນໍາໃຊ້ສິດຂອງທ່ານພາຍໃຕ້ນະໂຍບາຍ, ທ່ານສາມາດຕິດຕໍ່ຫາ KBank ຜ່ານທາງ K PLUS, ສາຂາຂອງ KBank ຫຼື ສູນບໍລິການ KBank (K - Contact Center) ໄດ້ທີ່ເບີໂທ (+856-21) 253341.

ນອກຈາກນັ້ນ, ທ່ານສາມາດຕິດຕໍ່ເຈົ້າໜ້າທີ່ຜູ້ປົກປ້ອງຂໍ້ມູນຜ່ານທາງອີເມວ: DataProtectionOfficer@kasikornbank.com ທີ່ຢູ່: ເລກທີ 1, ຊອຍຣາດບູລະນະ 27/1, ຖະໜົນຣາດບູລະນະ, ແຂວງຣາດບູລະນະ, ເຂດຣາດບູລະນະ, ບາງກອກ 10140.